ມະຫາສານ ລາຍວັນ
mahaxan.com

ມະຫາສານ

ລາຍວັນ ◆ MAHAXAN DAILY ◆ mahaxan.com

ໂຄສະນາ
ພື້ນທີ່ໂຄສະນາ
44 × 25 ມມ · ຕິດຕໍ່ WhatsApp 020 5888 6182

ວັນພະຫັດ 5 ພະຈິກ 2026 · ສະບັບທີ 015 | ສະຫຼຸບຂ່າວປະຈຳວັນພຸດ 4 ພະຈິກ 2026 · 24 ຂ່າວ | 22 ໜ້າ · ອ່ານຟຣີ · ສົ່ງຕໍ່ໃຫ້ໝູ່ໄດ້

◆ **ກິລາ** · 14:01 ໂມງ · ອ່ານ 65 ຄັ້ງ

ເປີດບົດລົງໂທດ “ເຮຊຸສ ໂອໂວໂມ” ຫຼັງປະທະກັບ “ເຮຊຸສ ເດ ມິເກລ” ກອງໜ້າເຕເນຣິເຟ ຈົນເສຍຊີວິດ



ຈາກເຫດການສຸດສະເທືອນໃຈວົງການບານເຕະສະເປນ ເມື່ອ ເຮຊຸສ ເດ ມິເກລ ກອງໜ້າອາຍຸ 30 ປີ ຂອງທີມ ເຕເນຣິເຟ ເສຍຊີວິດ ຫຼັງໄດ້ຮັບບາດເຈັບຈາກ ຈັ່ງຫວະປະທະຢ່າງຮຸນແຮງກັບ ເຮຊຸສ ໂອໂວໂມ ຜູ້ຮັກສາປະຕູຂອງທີມ ເອັຟຊີ ອັນດໍຣາ ໃນການແຂ່ງຂັນ ລີກເຊກຸນດາ ດິວິຊັນ ຂອງສະເປນ ຈົນຜູ້ຕັດສິນຕ້ອງ ຢຸດການແຂ່ງຂັນກ່ອນໝົດເວລາພຽງ 2 ນາທີ.

ລ່າສຸດ ມີລາຍງານວ່າ ໂອໂວໂມ ອາດຕ້ອງ ປະເຊີນກັບບົດລົງໂທດຢ່າງໜັກ ທັງໃນດ້ານກິລາ ບານເຕະ ແລະທາງກົດໝາຍ ໂດຍມີຄວາມສ່ຽງຖືກ

ຕໍ່ໜ້າ 2

◆ **ຂ່າວພາຍໃນ** · 09:26 ໂມງ

ປກສ ແຂວງບໍລິຄຳໄຊ ທົດສະກຳຄືນຄະດີຄາດຕະກຳ ພ້ອມ ກັກຕົວຜູ້ຖືກຫາ 03 ຄົນ



ວັນທີ 03 ພະຈິກ 2026 ນີ້, ຫ້ອງຕຳຫຼວດ ກອງບັນຊາການ ປກສ ແຂວງບໍລິຄຳໄຊ ໄດ້ສົມທົບກັບ ພະແນກຕຳຫຼວດ ປກສ ເມືອງປາກຊັນ ລົງທົດສະກຳຄືນຄະດີຄາດຕະກຳ ຢູ່ບ້ານນາສີ້ມໍ ເມືອງປາກຊັນ ແຂວງບໍລິຄຳໄຊ ພ້ອມດ້ວຍຜູ້ຖືກຫາ 03 ຄົນ ມາດຳເນີນຄະດີຕາມລະບຽບກົດໝາຍ; ໂດຍການນຳພາຂອງທ່ານ ພັທ ບຸນ ອິນທິລາດ ຮອງຫົວໜ້າຫ້ອງຕຳຫຼວດ ປກສ ແຂວງ, ມີທ່ານ ພັທ ຮັກ ເທ ວາ ຮອງຫົວໜ້າກອງບັນຊາການ ປກສ ເມືອງປາກຊັນ, ມີ ຄະນະພະແນກສືບສວນ-ສອບສວນ ປກສ ແຂວງ, ຄະນະພະ ແນກຕຳຫຼວດ ປກສ ເມືອງ ປາກຊັນ, ມີອຳນາດການປົກຄອງ

ຕໍ່ໜ້າ 2

ໃນສະບັບນີ້

2 ກິລາ
3 ຂ່າວພາຍໃນ
8 ເສດຖະກິດ-ສັງຄົມ
10 ສາລະໜ້າຮູ້
12 ຂ່າວຕ່າງປະເທດ
20 ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ



◆ **ເສດຖະກິດ-ສັງຄົມ** · 07:16 ໂມງ

Bezz Solution ຈັດ ສຳມະນາ AI Implementatio...

ອ່ານໜ້າ 8 ▸



◆ **ຂ່າວຕ່າງປະເທດ** · 16:00 ໂມງ

ອີລອນ ມັສກ໌ ຍອມຮັບ ພ່າຍແພ້ ຫຼັງທຸ່ມ 445 ລ້ານໂດລາ ຊ່ວຍຣີພັ...

ອ່ານໜ້າ 12 ▸



◆ **ສາລະໜ້າຮູ້** · 16:10 ໂມງ

ໃນລະຫວ່າງ 72 ຊົ່ວໂມງ ຫາ 10 ມື້ ເປັນຫຍັງຫຼາຍປະເທດຈຶ່...

ອ່ານໜ້າ 10 ▸

ໂຄສະນາ
ໃຫ້ແບຣນຂອງທ່ານ ຢູ່ໜ້າ 1 ທຸກເຊົ້າ
ໂຄສະນາໃນ ມະຫາສານ ລາຍວັນ — ໜັງສືພິມ PDF ທີ່ຄົນລາວດາວໂຫຼດ ແລະ ຮັບທາງອີເມວ ທຸກເຊົ້າ
WhatsApp 020 5888 6182

ເປີດບົດລົງໂທດ “ເຮຊຸສ ໂອໂอโม” ຫຼັງປະທะกับ “เฮซุส เด มิเ...

(ต่อจากหน้า 1)

ห้ามลงแข่งขันสูงสุด 8 นัด

ລາຍງານຈາກ Mundo Deportivo ສື່ຂອງສะเปน ละบุว่า ตามมาตตา 130 ของประมวลอิไม กีลา การกีนที่ทำให้เกิดอันตะลายต่อคู่แข่ง อาดมีโทดห้ามลงแข่งขัน 1-3 นัด. แต่ถ้าเป็นกรณีที่มีความรุนแรงเป็นพิเสด คะนะกำมะการอิไมอาดพิจาละนาลงโทดตามมาตตา 102 ซึ่งกำนดโทดห้ามลงแข่งขันตั้งแต่ 4-12 นัด. ดังนั้น จึงมีการประเมินว่า โอโอโม อาดถูกลงโทดห้ามลงแข่งขันสูงเถิง 8 นัด

นอกจากนี้ เหดการดังกล่าวอาดลุกลามไปเถิงคะดีอายา เซิ่งอาดมีโทดจำคุกสูงสุด 4 ปี. สื่กีลาชุดังของสะเปน Sport เปิดเผยประเด็นด้านกดหมายว่า เหดการนี้อาดบ่จบพงบดลงโทดทางบานเตะ แต่อาดขะหยายไปสู่ขะบอบการยุติทำอีกด้วย

เนื่องจากประมวลกดหมายอายา ของสะเปน มาตตา 142 ละบุว่า ผู้ที่กะทำการโดยประหมาดเลินเล่อย่างร้ายแรง จินเป็นเหดให้ผู้อื่นเสยชีวิด อาดต้องรับโทดจำคุกตั้งแต่ 1-4 ปี

แบอใดกดตาม การดำเนินคะดีอายาจะต้องพิจาละนาว่า จังหวะปะทะดังกล่าวเป็นการกะทำที่เกินขอบเขดถามส่งตามปักกะดีของการแข่งขันกีลาหรือบ่. โดยจะต้องกอดสอบหลักฐานต่างๆ ปะกอบการพิจาละนา ทั้งพายอีดีโอ, ลักสะนะการเข้าปะทะ, ตำแหน่งของบาน และลายงานทางการแพด ถ้าหากถอยถือของผู้เสยชีวิดดัดสินใจดำเนินคะดี

ด้าน โอโอโม กำลังอยู่ในสะพาบจิดใจที่ย่ำแย่อย่างหนัก จากเหดการที่เกิดขึ้น โดยเจ้าตือมีถามประสงค์ที่จะเข้าพบ และกล่าวอโทดถอยถือของ เดมิเกล ด้วยดินเอง ท่ามกางถามโสกเสร้าของวงการบานเตะสะเปน ต่อการสูนเสยในครั้งนี้

ปกส ແຂວງບໍລິຄຳໄຊ ທົດສะกำลังคะดีลาดตะกำ ข้อมกักตั...

(ต่อจากหน้า 1)

บ้าน, กำลัง ปกช-ปกส บ้าน, ปกส กุ่มบ้าน ตะหูอดธอดเจ้าหน้าที่ หน่วยงานอายา-เสดถะกิด ปกส เมืองปากซัน เข้าร่วม.

ເຈົ້າໜ້າທີ່ໜ່ວຍງານຄະດີອາຍາ-ເສດຖະກິດ ໄດ້ໃຫ້ຮູ້ວ່າ ໃນຄັ້ງວັນທີ 09 ຕຸລາ 2026 ໄດ້ຮັບแจ้งถอามจากพินละเมืองดิว่า: ได้มีท้าว อินทะวา ຫຼື จ่อย พักเฮาอยู่บ้านบาสี้มม่ เมืองปากซัน แຂวงบໍລິຄຳໄຊ ได้ถูกถินธ้ายบ่รู้ชื่ และ ที่อยู่ ใช้อาวุดปืนบ่รู้ชะนิด ยิงใส่ขะมับเบื้องขวาของ ท้าว อินทะวา ຫຼື จ่อย อยู่สวนยางพาลา, พายหลังได้รับแจ้งถอาม เจ้าหน้าที่วิชาสะเพาะ จึงได้ลงกวดกา และ ซับนะสุดแห่งข่าวเห้นว่ามีมูนถอามจิงแท้ ตักมาธอด วันที่ 22 ตุลา 2026 จึงสามาดกักตือผู้ถูกหา 03 ถือท้าว สินทะลา ຫຼື โก้, นางขันแก้ว และ ท้าว คำแพง มาดำเนินคะดีตามละบຽบกดหมาย. ผ่านการสืบสอบสอบ-สอบสวน: ท้าว สินทะลา ຫຼື โก้ อายุ 30 ปี, อาชีบ กำมะกอน อยู่บ้านบาสี้มม่ เมืองปากซัน แຂวงบໍລິຄຳໄຊ ได้ใช้การธับสาละพาบว่า ในไลยะเดือน มิถุนา ปี 2026 ผู้กล่าวได้ไปไล่งัว ให้ผู้เป็นน้าสาว อยู่บ้านบาสี้มม่ เมืองปากซัน ได้ถูกท้าว อินทะวา ຫຼື จ่อย ผู้เสยชีวิด ลักเอามีดปาดคำ และ ใช้ไม้ค้อนตีหัว ผู้กล่าวอยู่ถอกงัว เซิ่งได้รับบาดเจ็บ และ หยิบ 8 เข็ม เพาะผ่านมา ท้าว อินทะวา ຫຼື จ่อย มักอาละอาด โดยอายใส่ผู้กล่าว และ เถียมีบันหาผิดถูงกันหลายถั้ง, ตักมาธอด วันที่ 08 ตุลา 2026 เวลาประมาน 05:00 โมง ผู้กล่าวได้ขี่ลิดจักยามาแต่เรือนผู้เป็นเมย แล้วไปแว่เรือนผู้เป็นแม่ ชื่ นางขันแก้ว พายหลังไปธอดผู้กล่าวได้เห้นท้าว อินทะวา ຫຼື จ่อย ผู้เสยชีวิด กำลังกิดยางพาลา อยู่สวนของ ผู้เป็นน้าสาว จึงเกิดมิแมอคิดบ่พ้อใจ ใช้กับผู้เสยชีวิด ที่เถียเอามีดปาดคำ ใช้ไม้ค้อนตีหัว และ มักโอยอายใส่ผู้กล่าวตะหูอด, หลังจากนั้น ดินเองจึ่งขึ้นไปเหิงถูงเพื่อจับเอาปืนประดิดที่ใช้ลูกดอก เป็นปืนที่ผู้กล่าวเธ้ดขึ้นเอง อยู่ถูงใกับเรือนของแม่, เล้ง และ ยิงใส่ท้าว อินทะวา ຫຼື จ่อย ที่กำลังกิดยางพาลาอยู่ จำนอน 01 ถั้ง เข้าบໍลิเอนละหับเบื้องขวาของผู้เสยชีวิด จึงเธ้ดให้ผู้เสยชีวิดล้มลงกับที่; ต่มาท้าว สินทะลา ຫຼື โก้ จึงได้ขึ้นไปเหิงถูง แล้วเอาปืนถิ้มลงป่องป้วม แล้วหนีไปเรือนของผู้เป็นเมย อยู่บ้านซะนะไซ เมืองปากซัน, ตักมาธอด วัน 22 ตุลา 2026 เวลาประมาน 13:00 โมง ผู้กล่าวจึงไปมอบตือต่อเจ้าหน้าที่ ปกส เมืองปากซัน และ ถูกกักตือมาดำเนินคะดีตามละบຽบกดหมาย. ส่วน นาง ขันแก้ว อายุ 47 ปี อาชีบ เธ้ดนา ผู้เป็นแม่ และ ท้าว คำแพง อายุ 40 ปี ผู้เป็นพ่ำ้า ทั้ง 02 ดิน อยู่บ้านบาสี้มม่ เมืองปากซัน แຂวงบໍลິຄຳໄຊ ได้ใช้การธับสาละพาบว่า: ในถั้งวันที่ 08 ตุลา 2026 เวลาประมาน 05:30 นาที ได้มีลูกชายผู้กำเหดถาดตะกำ มาธ้องปุกพวกดินที่กำลังนอนอยู่เรือน พวกกล่าวได้ยิงสยงจิ่งลูกออกมา และ สินทะนากับท้าว สินทะลา ຫຼື โก้ ประมาน 05 นาที จึ่งรู้ว่าท้าว สินทะลา ຫຼື โก้ ได้ลงมือกำเหดถาดตะกำ ท้าว อินทะวา ຫຼື จ่อย โดยการใช้ปืนประดิด ยิงใส่บໍลิเวนละหับเบท้องขวา ผู้เสยชีวิด และ เธ้ดให้ผู้ถูกเถาะธ้ายล้มลงกับที่, ต่มาท้าว คำแพง จึ่งได้ไปจับเอาปืนที่ลูกชายใช้กำเหดถาดตะกำไปถิ้มลงหมองที่ห่างจากเรือนประมาน 50 แม้ด, ตักมาธอดเวลาประมาน 08:00 โมงของวันดงกันกับ นางขันแก้ว จึ่งได้โทหา ผู้เป็นน้าสาว และอำนาดการปักถองบ้านมาเบิ่ง แล้วนำตือท้าว อินทะวา ຫຼື จ่อย ส่งโธงหมอเพื่อปั่นป่อ และ เสยชีวิดในเวลาต่มา,ในเบื้องต้น นาง ขันแก้ว และ ท้าว คำแพง ได้ให้การปะติเสดว่าบ่รู้บ่เห้น เพื่อปิดบังการกะทำผิดของลูกชาย, ผ่านการลงเก็บกำข้อมูนหลักฐานตามหลักการอิชาสะเพาะ, พาอะอิไส และ มีข้อมูนหลักฐานผูกมัด ตักมาธอด วันที่ 22 ตุลา 2026 พวกกล่าวทั้ง 02 จึ่งให้การยอมธับสาละพาบว่าได้เจดตะนาปิดบังการกะทำผิดจิงแท้ จึ่งถูกเจ้าหน้าที่กักตือมาดำเนินคะดีตามขั้นตอนกดหมายกำนิดไว้.

ເจ้าหน้าที่ยังให้รู้อีกว่า ผ่านการสืบสอบ-สอบสวน, เก็บกำข้อมูน, หลักฐาน, พะยาน และ คำให้การสามาดสังเกดติลาถาว่า: ท้าว สินทะลา ຫຼື โก้ แม่นมีเจดตะนา ถาดตะกำแท้ เซิ่งสะแดงออก ในการใช้อาวุดปืน ยิงใส่ผู้เถาะธ้ายจินเสยชีวิด การกะทำดังกล่าวได้เธ้ดให้บุกถินอื่นเสยชีวิด, สังถิมบ่มีถามสะหงบ บ่มีถามเป็นละบຽบธรบธ้อย เซิ่งผิดในประมวลกดหมายอายาสะบับ ปับปุง ปี 2017 มาดตา 188 เป็นการกะทำผิดในสะถานการถาดตะกำ; ส่วน นาง ขันแก้ว และ ท้าว คำแพง แม่นผิดในข้อหา ปิดบังการกำทำผิด มาดตาม 380 ของประมวลกดหมายอายา สะบับปับปุง ปี 2017 เซิ่งสะแดงออก พวกกล่าวได้เอาปืนที่ผู้กำเหดใช้ถาดตะกำไปถิ้มลงหมอง และ ยังบ่ให้การที่เป็นข้อมูนถอามจิงกับเจ้าหน้าที่ ปะจุบันถะดีดังกล่าวยังอยู่ในขั้นตอนสะหงบสำนอนคะดี เพื่อสั่งให้อิงการไอยะการปะชาชน สั่งฟ้องสานดัดสินตามละบຽบกดหมายอย่างเข้มงอด.

ที่มา: ป้องกันถามสะหงบ แຂวงบໍลิຄำไซ

โฆสะบา

ลงโฆสะบา ใน มะหาสาน ลายวัน

หนังสือพิม PDF ประจำวัน · จองเป็นลายวัน, ลายอาทิด หรือ ลายเดือน · ทิมงานออกแบบให้ฟรี

WhatsApp 020 5888 6182

ຂ່າວພາຍໃນ · 15:19 ໂມງ · ອ່ານ 10 ຄັ້ງ

ປກສ ແຂວງບໍລິຄຳໄຊ ທົດສະກຳຄືນຄະດີຄາດຕະກຳ ພ້ອມກັກຕົວຜູ້ຖືກຫາ 03 ຄົນມາດຳເນີນຄະດີຕາມລະບຽບກົດໝາຍ



ອັນທີ 03 ພະຈິກ 2026 ນີ້, ຫ້ອງຕຳຫຼວດ ກອງບັນຊາການ ປກສ ແຂວງບໍລິຄຳໄຊ ໄດ້ສົມທົບກັບ ພະແນກຕຳຫຼວດ ປກສ ເມືອງປາກຊັນ ລົງທົດສະກຳຄືນຄະດີຄາດຕະກຳ ຢູ່ບ້ານນາສີ້ມໍ ເມືອງປາກຊັນ ແຂວງບໍລິຄຳໄຊ ພ້ອມດ້ວຍຜູ້ຖືກຫາ 03 ຄົນ ມາດຳເນີນຄະດີຕາມລະບຽບກົດໝາຍ; ໂດຍການນຳພາຂອງທ່ານ ພັທ ບຸນ ອິນທິລາດ ຮອງຫົວໜ້າຫ້ອງຕຳຫຼວດ ປກສ ແຂວງ, ມີທ່ານ ພັທ ຮັກ ເທວາ ຮອງຫົວໜ້າກອງບັນຊາການ ປກສ ເມືອງປາກຊັນ, ມີຄະນະພະແນກສືບສວນ-ສອບສວນ ປກສ ແຂວງ, ຄະນະພະແນກຕຳຫຼວດ ປກສ ເມືອງ ປາກຊັນ, ມີອຳນາດການປົກຄອງບ້ານ, ກຳລັງ ປກຊ-ປກສ ບ້ານ, ປກສ ກຸ່ມ ບ້ານ ຕະຫຼອດຮອດເຈົ້າໜ້າທີ່ ໜ່ວຍງານອາຍາ-ເສດຖະກິດ ປກສ ເມືອງປາກຊັນ ເຂົ້າຮ່ວມ.

ເຈົ້າໜ້າທີ່ໜ່ວຍງານຄະດີອາຍາ-ເສດຖະກິດ ໄດ້ໃຫ້ຮູ້ວ່າ ໃນຄັ້ງວັນທີ 09 ຕຸລາ 2026 ໄດ້ຮັບແຈ້ງຄວາມຈາກພົນລະເມືອງດີວ່າ: ໄດ້ມີທ້າວ ອິນທະວາ ຫຼື ຈ່ອຍ ພັກເຊົາຢູ່ບ້ານນາສີ້ມໍ ເມືອງ ປາກຊັນ ແຂວງບໍລິຄຳໄຊ ໄດ້ຖືກຄົນຮ້າຍ ບໍ່ຮູ້ຊື່ ແລະ ທີ່ຢູ່ ໃຊ້ອາວຸດປືນບໍ່ຮູ້ຊະນິດ ຍິງໃສ່ຂະນັບເບື້ອງຂວາຂອງ ທ້າວ ອິນທະ ວາ ຫຼື ຈ່ອຍ ຢູ່ສວນຢາງພາລາ.

ພາຍຫຼັງໄດ້ຮັບແຈ້ງຄວາມ ເຈົ້າໜ້າທີ່ວິຊາສະເພາະ ຈຶ່ງໄດ້ລົງກວດກາ ແລະ ຊັນນະສູດແຫຼ່ງຂ່າວ ເຫັນວ່າມີມູນ ຄວາມຈິງແທ້ ຕົກມາຮອດວັນທີ 22 ຕຸລາ 2026 ຈຶ່ງສາມາດກັກຕົວຜູ້ຖືກຫາ 03 ຄົນ ຄື : ທ້າວ ສົມທະລາ ຫຼື ໂກ້, ນາງຂັນ ແກ້ວ ແລະ ທ້າວ ຄຳແພງ ມາດຳເນີນຄະດີ ຕາມລະບຽບກົດໝາຍ.

ຜ່ານການສືບສວນສອບ-ສອບ ສວນ: ທ້າວ ສົມທະລາ ຫຼື ໂກ້ ອາຍຸ 30 ປີ, ອາຊີບກຳມະກອນ ຢູ່ບ້ານນາສີ້ມໍ ເມືອງປາກຊັນ ແຂວງບໍລິຄຳໄຊ ໄດ້ໃຫ້ ການຮັບສາລະພາບວ່າ ໃນໄລຍະເດືອນ ມິຖຸນາ ປີ 2026 ຜູ້ກ່ຽວໄດ້ໄປໄລ່ງົວ ໃຫ້ ຜູ້ເປັນນ້າສາວ ຢູ່ບ້ານນາສີ້ມໍ ເມືອງປາກ ຊັນ ໄດ້ຖືກທ້າວ ອິນທະວາ ຫຼື ຈ່ອຍ ຜູ້ ເສຍຊີວິດ ລັດເອົາມີດປາດຄໍ ແລະ ໃຊ້ ໄມ້ຄ້ອນຕີຫົວຜູ້ກ່ຽວຢູ່ຄອກງົວ ເຊິ່ງໄດ້ ຮັບບາດເຈັບ ແລະ ຫຍິບ 8 ເຂັມ ເພາະ ຜ່ານມາ ທ້າວ ອິນທະວາ ຫຼື ຈ່ອຍ ມັກອາ ລະວາດ ໂອຍອາຍໃສ່ຜູ້ກ່ຽວ ແລະ ເຄີຍມີ ບັນຫາຜິດຖຽງກັນຫຼາຍຄັ້ງ, ຕົກມາຮອດ ວັນທີ 08 ຕຸລາ 2026 ເວລາປະມານ 05:00 ໂມງ ຜູ້ກ່ຽວໄດ້ຂີ່ລົດຈັກມາແຕ່ ເຮືອນຜູ້ເປັນເມຍ ແລ້ວໄປແວ່ເຮືອນຜູ້ ເປັນແມ່ ຊື່ ນາງຂັນແກ້ວ ພາຍຫຼັງໄປຮອດ ຜູ້ກ່ຽວໄດ້ເຫັນທ້າວ ອິນທະວາ ຫຼື ຈ່ອຍ ຜູ້ເສຍຊີວິດ ກຳລັງກົດຢາງພາລາ ຢູ່ສວນ ຂອງ ຜູ້ເປັນນ້າສາວ ຈຶ່ງເກີດມີແນວຄິດບໍ່ ພໍໃຈ ໃຫ້ກັບຜູ້ເສຍຊີວິດ ທີ່ເຄີຍເອົາມີດ ປາດຄໍ ໃຊ້ໄມ້ຄ້ອນຕີຫົວ ແລະ ມັກໂອຍ ອາຍໃສ່ຜູ້ກ່ຽວຕະຫຼອດ.

ຫຼັງຈາກນັ້ນ ຕົນເອງຈຶ່ງຂຶ້ນໄປເທິງ ຖຽງເພື່ອຈັບເອົາປືນປະດິດທີ່ໃຊ້ລູກດອກ ເປັນປືນທີ່ຜູ້ກ່ຽວເຮັດຂຶ້ນເອງ ຢູ່ຖຽງໃກ້ ກັບເຮືອນຂອງແມ່, ເລັ່ງ ແລະ ຍິງໃສ່ທ້າວ ອິນທະວາ ຫຼື ຈ່ອຍ ທີ່ກຳລັງກົດຢາງພາລາ ຢູ່ ຈຳນວນ 01 ຄັ້ງ ເຂົ້າບໍລິເວນຂະໜັບ ເບື້ອງຂວາຂອງຜູ້ເສຍຊີວິດ ຈຶ່ງເຮັດໃຫ້ຜູ້ ເສຍຊີວິດລົ້ມລົງກັບທີ່; ຕໍ່ມາທ້າວ ສົມທະ ລາ ຫຼື ໂກ້ ຈຶ່ງໄດ້ຂຶ້ນໄປເທິງຖຽງແລ້ວເອົາ ປືນຖິ້ມລົງປ່ອງຢ້ຽມ ແລ້ວໜີໄປເຮືອນ ຂອງຜູ້ເປັນເມຍ ຢູ່ບ້ານຊະນະໄຊ ເມືອງ ປາກຊັນ, ຕົກມາຮອດ ວັນ 22 ຕຸລາ 2026 ເວລາປະມານ 13:00 ໂມງ ຜູ້ ກ່ຽວຈຶ່ງໄປມອບຕົວຕໍ່ເຈົ້າໜ້າທີ່ ປກສ ເມືອງປາກຊັນ ແລະ ຖືກກັກຕົວມາດຳ ເນີນຄະດີຕາມລະບຽບກົດໝາຍ.

ສ່ວນ ນາງ ຂັນແກ້ວ ອາຍຸ 47 ປີ ອາຊີບ ເຮັດນາ ຜູ້ເປັນແມ່ ແລະ ທ້າວ ຄຳ ແພງ ອາຍຸ 40 ປີ ຜູ້ເປັນພໍ່ນ້າ ທັງ 02 ຄົນ ຢູ່ບ້ານນາສີ້ມໍ ເມືອງປາກຊັນ ແຂວງບໍລິ ຄຳໄຊ ໄດ້ໃຫ້ການຮັບສາລະພາບວ່າ: ໃນ ຄັ້ງວັນທີ 08 ຕຸລາ 2026 ເວລາປະມານ 05:30 ນາທີ ໄດ້ມີລຸກຊາຍຜູ້ກໍ່ເຫດຄາດ ຕະກຳ ມາຮ້ອງປຸກພວກຕົນທີ່ກຳລັງນອນ ຢູ່ເຮືອນ ພວກກ່ຽວໄດ້ຍິງສຽງຈ້ຽງລຸກອອກ ມາ ແລະ ສົນທະນາກັບທ້າວ ສົນທະລາ ຫຼື ໂກ້ ປະມານ 05 ນາທີ ຈຶ່ງຮູ້ວ່າທ້າວ ສົນ ທະລາ ຫຼື ໂກ້ ໄດ້ລົງມືກໍ່ເຫດຄາດຕະກຳ ທ້າວ ອິນທະວາ ຫຼື ຈ່ອຍ ໂດຍການໃຊ້ປືນ ປະດິດ ຍິງໃສ່ບໍລິເວນຂະໜັບເບທ້ອງຂວາ ຜູ້ເສຍຊີວິດ ແລະ ເຮັດໃຫ້ຜູ້ຖືກເຄາະຮ້າຍ ລົ້ມລົງກັບທີ່, ຕໍ່ມາທ້າວ ຄຳແພງ ຈຶ່ງໄດ້ໄປ ຈັບເອົາປືນທີ່ລຸກຊາຍໃຊ້ກໍ່ເຫດຄາດຕະກຳ ໄປຖິ້ມລົງໜອງທີ່ຫ່າງຈາກເຮືອນປະມານ 50 ແມັດ, ຕົກມາຮອດເວລາປະມານ 08:00 ໂມງຂອງວັນດຽວກັນ ນາງຂັນ ແກ້ວ ຈຶ່ງໄດ້ໂທຫາ ຜູ້ເປັນນ້າສາວ ແລະ ອຳນາດການປົກຄອງບ້ານມາເບິ່ງ ແລ້ວນຳ ຕົວທ້າວ ອິນທະວາ ຫຼື ຈ່ອຍ ສົ່ງໂຮງໝໍ ເພື່ອປິ່ນປົວ ແລະ ເສຍຊີວິດໃນເວລາ ຕໍ່ມາ,ໃນເບື້ອງຕົ້ນ ນາງ ຂັນແກ້ວ ແລະ ທ້າວ ຄຳແພງ ໄດ້ໃຫ້ການປະຕິເສດວ່າບໍ່ຮູ້ ບໍ່ເຫັນ ເພື່ອປົດບັງການກະທຳຜິດຂອງລຸກ ຊາຍ, ຜ່ານການລົງເກັບກຳຂໍ້ມູນຫຼັກຖານ ຕາມຫຼັກການວິຊາສະເພາະ, ພາຍວິໄສ ແລະ ມີຂໍ້ມູນຫຼັກຖານຜູກມັດ ຕົກ ມາຮອດ ວັນທີ 22 ຕຸລາ 2026 ພວກ ກ່ຽວທັງ 02 ຈຶ່ງໃຫ້ການຍອມຮັບ ສາລະພາບວ່າໄດ້ເຈດຕະນາປົດບັງການກະ ທຳຜິດຈິງແທ້ ຈຶ່ງຖືກເຈົ້າໜ້າທີ່ກັກຕົວ ມາດຳເນີນຄະດີຕາມຂັ້ນຕອນກົດໝາຍກຳ ນົດໄວ້.

ເຈົ້າໜ້າທີ່ຍັງໃຫ້ຮູ້ອີກວ່າ ຜ່ານການ ສືບສວນ-ສອບສວນ, ເກັບກຳຂໍ້ມູນ, ຫຼັກຖານ, ພະຍານ ແລະ ຄຳໃຫ້ການ ສາມາດສັງເກດຕີລາຄາວ່າ: ທ້າວ ສົນທະ ລາ ຫຼື ໂກ້ ແມ່ນມີເຈດຕະນາ ຄາດຕະກຳ ແທ້ ເຊິ່ງສະແດງອອກ ໃນການໃຊ້ອາວຸດ ປືນ ຍິງໃສ່ຜູ້ເຄາະຮ້າຍຈົນເສຍຊີວິດ ການ ກະທຳດັ່ງກ່າວໄດ້ເຮັດໃຫ້ບຸກຄົນອື່ນເສຍ ຊີວິດ, ສັງຄົມບໍ່ມີຄວາມສະຫງົບ ບໍ່ມີ ຄວາມເປັນລະບຽບຮຽບຮ້ອຍ ເຊິ່ງຜິດໃນ ປະມວນກົດໝາຍອາຍາສະບັບ ປັບປຸງ ປີ 2017 ມາດຕາ 188 ເປັນການກະທຳຜິດ ໃນສະຖານການຄາດຕະກຳ; ສ່ວນ ນາງ ຂັນແກ້ວ ແລະ ທ້າວ ຄຳແພງ ແມ່ນຜິດ ໃນຂໍ້ຫາ ປິດບັງການກຳທຳຜິດ ມາດຕາມ 380 ຂອງປະມວນກົດໝາຍອາຍາ ສະບັບ ປັບປຸງ ປີ 2017 ເຊິ່ງສະແດງອອກ ພວກ ກ່ຽວໄດ້ເອົາປືນທີ່ຜູ້ກໍ່ເຫດໃຊ້ຄາດຕະກຳ ໄປຖິ້ມລົງໜອງ ແລະ ຍັງບໍ່ໃຫ້ການທີ່ເປັນ ຂໍ້ມູນຄວາມຈິງກັບເຈົ້າໜ້າທີ່ ປະຈຸບັນ ຄະດີດັ່ງກ່າວຍັງຢູ່ໃນຂັ້ນຕອນສະຫຼຸບສຳ ນວນຄະດີ ເພື່ອສົ່ງໃຫ້ອົງການໄອຍະການ ປະຊາຊົນ ສັ່ງຟ້ອງສານຕັດສິນຕາມ ລະບຽບກົດໝາຍຢ່າງເຂັ້ມງວດ.

ທີ່ມາ: ປ້ອງກັນຄວາມສະຫງົບ ແຂວງບໍລິຄຳໄຊ

◆ ຂ່າວພາຍໃນ · 14:12 ໂມງ · ອ່ານ 9 ຄັ້ງ

ນາຍົກລັດຖະມົນຕີ ຕ້ອນຮັບຜູ້ບັນຊາການທະຫານສູງສຸດແຫ່ງ ສສ ມຽນມາ ພ້ອມຮ່ວມກັນສອງກອງທັບ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ແລະ ບັນຫາຕາມຊາຍແດນ.



ໃນຕອນເຊົ້າຂອງວັນທີ 04 ພະຈິກ 2026, ທີ່ສຳນັກງານນາຍົກລັດຖະມົນຕີ, ທ່ານ ສະເຫຼີມໄຊ ກົມມະສິດ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄດ້ໃຫ້ກຽດຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງທ່ານ ພົນເອກ ແຢ ວິນ ອຸ, ຜູ້ບັນຊາການທະຫານສູງສຸດ ແຫ່ງ ສສ ມຽນມາ ພ້ອມດ້ວຍຄະນະ ໃນໂອກາດທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ໃນລະຫວ່າງ ວັນທີ 03-06 ພະຈິກ 2026.

ທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄດ້ກ່າວສະແດງຄວາມຍິນດີຕ້ອນຮັບອັນອົບອຸ່ນ ແລະ ຕີລາຄາສູງ ຕໍ່ການເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ຂອງທ່ານ ພົນເອກ ແຢ ວິນ ອຸ ພ້ອມດ້ວຍຄະນະ, ເຊິ່ງເປັນການຮັດແໜ້ນສາຍພົວພັນມິດຕະພາບ ຖານບ້ານໃກ້ເຮືອນຄຽງທີ່ດີ ແລະ ເສີມຂະຫຍາຍການພົວພັນຮ່ວມມື ຂອງສອງຊາດ, ສອງກອງທັບ ລາວ-ມຽນ ໃຫ້ນັບມື້ນັບເຕີບໃຫຍ່ຂະຫຍາຍຕົວຍິ່ງໆຂຶ້ນ, ທັງສະແດງຄວາມຍິນດີ ແລະ ຊົມເຊີຍ ຕໍ່ທ່ານ ພົນເອກ ແຢ ວິນ ອຸ ທີ່ໄດ້ຮັບຕຳແໜ່ງເປັນຜູ້ບັນຊາການທະຫານສູງສຸດຄົນໃໝ່ ແຫ່ງ ສສ ມຽນມາ ແລະ ສະເໜີໃຫ້ສອງກອງທັບ ລາວ-ມຽນມາ ສືບຕໍ່ປະສານສົມທົບກັນ ເພື່ອສະກັດກັ້ນປະກົດການຫຍໍ້ທໍ້ຕ່າງໆ ເປັນຕົ້ນການລັກລອບເຂົ້າເມືອງຜິດກົດໝາຍ, ອາຊະຍາກຳຂ້າມຊາດ, ອາຊະຍາກຳທາງໂທລະຄົມມະນາຄົມ, ການຄ້າຂາຍເຖື່ອນ, ການຂົນສົ່ງຢາເສບຕິດ, ລວມທັງ ການນຳໃຊ້ແຮງງານ ທີ່ບໍ່ຖືກຕ້ອງ ຕາມບໍລິເວນຊາຍແດນ ລາວ-ມຽນມາ ໂດຍຜ່ານກົນໄກທີ່ສອງຝ່າຍມີຮ່ວມກັນ ໃຫ້ໄດ້ຮັບຜົນດີ.

ທ່ານ ພົນເອກ ແຢ ວິນ ອຸ ໄດ້ກ່າວສະແດງຄວາມຂອບໃຈ ຕໍ່ທ່ານ ນາຍົກລັດຖະມົນຕີ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ສະໜັບສະໜຸນຊ່ວຍເຫຼືອ ສສ ມຽນມາ ຕະຫຼອດໄລຍະຜ່ານມາ, ພ້ອມທັງ ສະເໜີຝ່າຍ ສປປ ລາວ ສືບຕໍ່ໃຫ້ການສະໜັບສະໜຸນຊ່ວຍເຫຼືອ ສສ ມຽນມາ ໃນເວທີພາກພື້ນ ແລະ ສາກົນ ກໍ່ຄືຂອບການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ.

ຂ່າວ-ພາບ: ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

◆ ຂ່າວພາຍໃນ · 13:42 ໂມງ · ອ່ານ 9 ຄັ້ງ

ອົງການກວດສອບແຫ່ງລັດ ສະຫຼຸບຜົນງານ 5 ປີ (2021-2025) ວາງທິດທາງແຜນການໃໝ່ 2026-2030 ພ້ອມມອບໃບຍ້ອງຍໍໃຫ້ພະນັກງານ 425 ທ່ານ.



ກອງປະຊຸມສະຫຼຸບວຽກງານຈັດຕັ້ງ ແລະ ການປົກຄອງ ຂອງອົງການກວດສອບແຫ່ງລັດ ໄລຍະ 5 ປີ (2021-2025) ແລະ ທິດທາງແຜນການໃນ 5 ປີຕໍ່ໜ້າ (2026-2030) ໄດ້ຈັດຂຶ້ນໃນວັນທີ 4 ຕຸລານີ້ ທີ່ອົງການກວດສອບແຫ່ງລັດ, ໂດຍການເປັນປະທານ ຂອງ ສະຫາຍ ວຽງທະວີສອນ ເທບພະຈັນ ກຳມະການສູນກາງພັກ ປະທານອົງການກວດສອບແຫ່ງລັດ, ມີຄະນະປະຈຳພັກ, ກຳມະການຄະນະພັກ, ຄະນະກົມ, ຄະນະນຳອົງການກວດສອບປະຈຳພາກ ແລະ ພະນັກງານເຂົ້າຮ່ວມ.

ໃນພິທີ, ສະຫາຍ ສີຕານ ໄຊຍະວົງພັດ ກຳມະການຄະນະພັກ ຫົວໜ້າກົມຈັດຕັ້ງ ໄດ້ຜ່ານບົດ ສະຫຼຸບຕີລາຄາ ວຽກງານຈັດຕັ້ງ ແລະ ການປົກຄອງ ຂອງອົງການກວດສອບແຫ່ງລັດ ໃນໄລຍະ 5 ປີ ຜ່ານມາ ແລະ ທິດທາງແຜນການ ໃນ 5 ປີຕໍ່ໜ້າ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນປຶກສາຫາລື ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ຕໍ່ວຽກງານຈັດຕັ້ງ ຂອງອົງການໃນຕໍ່ໜ້າ.

ໃນກອງປະຊຸມຄັ້ງນີ້, ບັນດາຜູ້ເຂົ້າຮ່ວມຍັງໄດ້ຮັບຟັງການເຜີຍແຜ່ເຊື່ອມຊຶມເອກະສານເປັນຕົ້ນມະຕິກອງປະຊຸມວຽກງານຈັດຕັ້ງທົ່ວປະເທດ ຄັ້ງທີ XII, ບົດ ໂອ້ລົມຂອງ ສະຫາຍ ເລຂາທິການໃຫຍ່ ຕໍ່ກອງປະຊຸມວຽກງານຈັດຕັ້ງທົ່ວປະເທດ ຄັ້ງທີ XII, ເຜີຍແຜ່ ໂດຍ ສະຫາຍ ຕ້ອຍ ພົນທິລາດ ຮອງເລຂາຄະນະພັກ ຮອງປະທານອົງການກວດສອບແຫ່ງລັດ, ມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ (ເລກທີ 64/ກມສພ), ເຜີຍແຜ່ໂດຍ ສະຫາຍ ບຸນເລີດ ເທບວົງສາ ຄະນະປະຈຳພັກ ປະທານຄະນະກວດກາພັກ ຮອງປະທານອົງການກວດສອບແຫ່ງລັດ ແລະ ມະຕິວ່າດ້ວຍການເພີ່ມທະວີ ວຽກງານແຂ່ງຂັນຍ້ອງຍໍໃນໄລຍະໃໝ່ (ເລກທີ 61/ກມສພ), ເຜີຍແຜ່ ໂດຍ ສະຫາຍ ນາງ ຕຸລາວັນ ພິມມະສອນ ກຳມະການຄະນະພັກ ຮອງປະທານອົງການກວດສອບແຫ່ງລັດ ເພື່ອນຳໄປຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບໝາກຜົນຢ່າງຈັບຈາມ. ໃນນັ້ນຍັງໄດ້ຈັດພິທີມອບໃບຍ້ອງຍໍໃຫ້ພະນັກງານພາຍໃນອົງການກວດສອບແຫ່ງລັດ ແລະ ອົງການກວດສອບປະຈຳພາກ ປະຈຳປີຈຳນວນທັງໝົດ 425 ທ່ານ ຍິງ 150 ທ່ານ. ໃນນັ້ນ, ປະເພດດີເດັ່ນ ຈຳນວນ 170 ທ່ານ ຍິງ 58 ທ່ານ, ປະເພດດີ ຈຳນວນ 245 ທ່ານ ຍິງ 92 ທ່ານ ແລະ ຊົມເຊີຍ ຈຳນວນ 10 ທ່ານ ຍິງ 1 ທ່ານ.

ໃນໂອກາດດັ່ງກ່າວ, ສະຫາຍ ວຽງທະວີສອນ ເທບພະຈັນ ໄດ້ເນັ້ນໃຫ້ ຄະນະພັກ-ຄະນະນຳ, ຄະນະກົມ, ສະມາຊິກພັກ, ພະນັກງານຂອງອົງການກວດສອບແຫ່ງລັດ ຈົ່ງພ້ອມກັນເສີມຂະຫຍາຍມູນ ເຊື້ອອັນດີງາມໃນການຈັດຕັ້ງປະຕິບັດວຽກງານຈັດຕັ້ງໃນໄລຍະຜ່ານມາ ແລະ ໄດ້ເນັ້ນໜັກໃຫ້ເປັນແບບຢ່າງໃນການນຳພາ ແລະ ເສຍສະຫຼະເພື່ອສ່ວນລວມຢ່າງສູງສົ່ງ ເພື່ອຮັບປະກັນປະສິດທິພາບໃນການປະ ຕິບັດໜ້າທີ່ວຽກງານ ກໍຄືການຜັນຂະຫຍາຍມະຕິປະຊຸມວຽກງານຈັດຕັ້ງທົ່ວປະເທດ ຄັ້ງທີ XII ແລະ ຈັດຕັ້ງຜັນຂະຫຍາຍວຽກງານຈັດຕັ້ງ ແລະ ການປົກຄອງ ຂອງອົງການກວດສອບແຫ່ງລັດ ຕາມທິດທາງແຜນການໃນ 5 ປີ ຕໍ່ໜ້າ (2026-2030) ໃຫ້ປະກົດຜົນເປັນຈິງ.

ຂ່າວ: ອົງການກວດສອບແຫ່ງລັດ

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ข่าวพายใน · 11:04 โมง · อ่าน 9 ครั้ง

ອົງການອາຫານໂລກ (WFP) ມອບເງິນຊ່ວຍເຫລືອ ຈຳນວນ 19,26 ຕື້ກີບ ຫຼື (ປະມານ 900.000 ໂດລາສະຫະລັດ) ໃຫ້ຜູ້ປະສົບໄພນ້ຳຖ້ວມ



ອົງການອາຫານໂລກ (WFP) ໂດຍການປະສານສົມທົບກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ມອບເງິນຊ່ວຍເຫລືອຈຳນວນ 19,26 ຕື້ກີບ (ປະມານ 900.000 ໂດລາສະຫະລັດ) ໂດຍການສະໜັບສະໜູນທຶນຈາກສະຫະລັດອາເມລິກາ ໃຫ້ແກ່ປະຊາຊົນ 15.000 ຄົນ ທີ່ປະສົບໄພນ້ຳຖ້ວມຢູ່ແຂວງສະຫວັນນະເຂດ ໃນເດືອນກໍລະກົດ ຫາ ກັນຍາ 2026 ຜ່ານມາ.

ເມື່ອເກີດອຸທົກກະໄພ, ການຊ່ວຍເຫຼືອດ້ານເງິນສົດ ຖືເປັນສິ່ງທີ່ມີຄວາມໝາຍຢ່າງຍິ່ງ ເພາະໄດ້ມອບອິດສະຫຼະໃຫ້ກັບແຕ່ລະຄອບຄົວ ໃນການເລືອກຊື້ສິ່ງຂອງທີ່ຈຳເປັນ ແລະ ຕ້ອງການຫຼາຍທີ່ສຸດ.

ຢູ່ທີ່ເມືອງໄຊບຸລີ, ແຂວງສະຫວັນນະເຂດ, ທ່ານ ພິງໄຊສັກ ອິນທະລາດ, ຮອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ທ່ານນາງ ມິເຊວ ເອົາລ໌, ຜູ້ຮັກສາການແທນ ເອກອັກຄະລັດຖະທູດສະຫະລັດ ອາເມລິກາ ປະຈຳ ລາວ, ແລະ ທ່ານ ມາກ-ອານເດຣ ໂປສ໌, ຜູ້ອຳນວຍການ ອົງການອາຫານໂລກ ປະຈຳ ລາວ ໄດ້ຮ່ວມກັບຊຸມຊົນທ້ອງຖິ່ນ ສະແດງໃຫ້ເຫັນເຖິງຄວາມສຳຄັນຂອງການຊ່ວຍເຫຼືອດ້ານເງິນສົດ ທີ່ສາມາດຕອບສະໜອງຄວາມຕ້ອງການດ້ານອາຫານ ສຸກເສີນຂອງຄອບຄົວທີ່ໄດ້ຮັບຜົນກະທົບ ຈາກໄພນ້ຳຖ້ວມ ຢ່າງທັນທ່ວງທີ, ໂດຍໄດ້ຮັບການສະໜັບສະໜູນຢ່າງເອື້ອເຟື້ອເພື່ອແຜ່ ຈາກ ສະຫະລັດ ອາເມລິກາ.

ອົງການອາຫານໂລກ (WFP) ຮ່ວມກັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ແຈກຢາຍເງິນສົດ ຊ່ວຍເຫຼືອໃຫ້ກັບປະຊາຊົນ 15,000 ຄົນ ໃນ 4 ເມືອງ ຂອງແຂວງສະຫວັນນະເຂດ. ໂດຍແຕ່ລະຄົນຈະໄດ້ຮັບເງິນ 1,350,000 ກີບ (ຫຼື 60 ໂດລາສະຫະລັດ), ເຊິ່ງຄິດໄລ່ໃຫ້ຄອບຄຸມຄວາມຕ້ອງການດ້ານອາຫານທີ່ຈຳເປັນ ເປັນເວລາ 30 ວັນ.


ການຊ່ວຍເຫຼືອເປັນເງິນສົດ ນອກຈາກຈະມອບທາງເລືອກ ແລະ ຄວາມຍືດຢຸ່ນໃຫ້ກັບຄອບຄົວໃນຍາມຂາດແຄນແລ້ວ, ຍັງຊ່ວຍຮັກສາສັກສີ ແລະ ສະໜັບສະໜຸນການຟື້ນຟູຊີວິດການເປັນຢູ່ ຂອງເຂົາເຈົ້າໃຫ້ດີຂຶ້ນອີກດ້ວຍ.

ທີ່ມາ: WFP

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 20 ໃນສະບັບນີ້

ຂ່າວພາຍໃນ · 11:33 ໂມງ · ອ່ານ 7 ຄັ້ງ

ທ່ານ ສອນໄຊ ສີພັນດອນ ປະທານສະພາແຫ່ງຊາດລາວ ພົບປະ ທ່ານ ເລ ມິງ ຮຶງ ນາຍົກລັດຖະມົນຕີຫວຽດນາມ



ໃນວັນທີ 3 ພະຈິກ 2026 ທີ່ ນະຄອນຫຼວງຮ່າໂນ້ຍ ສະຫາຍ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງ ໄດ້ພົບປະ ເຮັດວຽກຮ່ວມກັບ ສະຫາຍ ເລ ມິງ ຮຶງ ກຳມະການກົມການເມືອງສູນກາງພັກ ນາຍົກລັດຖະມົນຕີ ແຫ່ງ ສສ ຫວຽດນາມ.

ການພົບປະຄັ້ງນີ້, ສອງຝ່າຍໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ຍັງສືບຕໍ່ແຕກດອກອອກຜົນ ແລະ ພວມນຳຜົນປະໂຫຍດຕົວຈິງແກ່ສອງປະເທດ, ສະແດງອອກໃນການຮ່ວມມືດ້ານການເມືອງ, ການຕ່າງປະເທດ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການພົວພັນເສດຖະກິດ-ການຄ້າ, ການລົງທຶນ ໄດ້ຮັບການເອົາໃຈໃສ່ ແລະ ມີຄວາມຄືບໜ້າກວ່າເກົ່າ ເຊິ່ງໃນ 9 ເດືອນຕົ້ນປີນີ້, ມູນຄ່າການຄ້າສອງຝ່າຍ ບັນລຸໄດ້ຫຼາຍກວ່າ 1,832 ລ້ານໂດລາ ໃນນີ້, ມູນຄ່າການສົ່ງອອກສິນຄ້າຂອງລາວໄປຫວຽດນາມ 1,425 ລ້ານໂດລາ ແລະ ມູນຄ່າການລົງທຶນຂອງຫວຽດນາມ ບັນລຸໄດ້ 4,7 ຕື້ໂດລາ ແລະ ຍັງສືບຕໍ່ຈັດຢູ່ໃນອັນດັບຕົ້ນໆ ຂອງການລົງທຶນຕ່າງປະເທດຢຸ່ລາວ.

ສະຫາຍ ປະທານສະພາແຫ່ງຊາດ ລາວ ສະແດງຄວາມຂອບໃຈຕໍ່ ສະຫາຍ ນາຍົກລັດຖະມົນຕີຫວຽດນາມ ທີ່ໄດ້ເອົາໃຈໃສ່ຊີ້ນຳ-ນຳພາຢ່າງໃກ້ຊິດຕໍ່ການຈັດຕັ້ງປະຕິບັດໂຄງການຮ່ວມມືລະຫວ່າງສອງລັດຖະບານ ເຊິ່ງຫຼາຍໂຄງການມີຄວາມຄືບໜ້າ ແລະ ມີປະສິດທິຜົນສູງ; ພ້ອມນີ້, ກໍສະເໜີໃຫ້ສືບຕໍ່ຊ່ວຍຕິດຕາມ ແລະ ຊີ້ນຳຢ່າງໃກ້ຊິດ ເພື່ອເຮັດໃຫ້ບັນດາໂຄງການທີ່ໄດ້ລົງນາມຮ່ວມກັນ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ແລະ ທັນຕາມກຳນົດເວລາ ໂດຍສະເພາະໂຄງການທີ່ຫາກໍ່ລົງນາມຮ່ວມມືກັນ, ໂຄງການທີ່ສືບຕໍ່ ແລະ ໂຄງການທີ່ພວມລິເລີ່ມຮ່ວມມື ເປັນຕົ້ນແມ່ນໂຄງການທ່າເຮືອຫວຸ່ງອາງ (ໄລຍະ 1, 2, 3), ໂຄງການເສັ້ນທາງດ່ວນ ວຽງຈັນ-ຮ່າໂນ້ຍ ແລະ ທໍ່ສົ່ງນ້ຳມັນ, ໂຄງການລິດໄຟ ລາວ-ຫວຽດນາມ ແລະ ໂຄງການອື່ນໆ ທີ່ຈະຊ່ວຍໃຫ້ ສປປ ລາວ ກາຍເປັນປະເທດເຊື່ອມໂຍງ-ເຊື່ອມຈອດຢ່າງເປັນຮູບປະທຳ.

ການນຳຂັ້ນສູງທັງສອງຝ່າຍ ຈະຊຸກຍູ້ການສ້າງກົດຈະກຳຕ່າງໆ ຮ່ວມກັນສະເຫຼີມສະຫຼອງປີສາມັກຄີມິດຕະພາບລາວ-ຫວຽດນາມ, ຫວຽດນາມ-ລາວ ປີ 2027 ເພື່ອໂຄສະນາສຶກສາອົບຮົມໃຫ້ຄົນຮຸ່ນໜຸ່ມ ໄດ້ຮຽນຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງຕໍ່ສາຍພົວພັນມິດຕະພາບແບບພິເສດ ລາວ-ຫວຽດນາມ, ຫວຽດນາມ-ລາວ ທີ່ຫາຍາກ ແລະ ມີໜຶ່ງດຽວໃນໂລກ.

ຂ່າວ: ສພຊ

ຂ່າວພາຍໃນ · 13:25 ໂມງ · ອ່ານ 5 ຄັ້ງ

ເຈົ້າໜ້າທີການຄ້າລົງກວດກາ ແລະ ຍຶດຢາສູບນຳເຂົ້າຈຳໜ່າຍບໍ່ຖືກຕ້ອງພາຍໃນນະຄອນຫຼວງພະບາງ



ໃນວັນທີວັນທີ 3 ພະຈິກ 2026 ເຈົ້າໜ້າທີກວດກາການຄ້າແຂວງຫລວງພະບາງ ສົມທົບພາກສ່ວນທີ່ກ່ຽວຂ້ອງ ໄດ້ລົງກວດກາຮ້ານຄ້າ ແລະ ສາງສິນຄ້າພາຍໃນນະຄອນຫຼວງພະບາງ ເພື່ອກວດກາສິນຄ້ານຳເຂົ້າທີ່ຈຳໜ່າຍບໍ່ຖືກຕ້ອງຕາມກົດໝາຍ.

ຈາກການກວດກາ, ເຈົ້າໜ້າທີໄດ້ພົບ ແລະ ຍຶດຢາສູບປະເພດຕ່າງໆ ເປັນຈຳນວນຫຼາຍ ທີ່ຫຸ້ມໃນຖົງພລາສຕິກ ແລະ ກ່ອງ, ລວມມີຍີ່ຫໍ້ຕ່າງໆ ເຊັ່ນ: Raison, Esse Change, Pine Change, Smoking Kills ແລະ ອື່ນໆ. ຢາສູບເຫຼົ່ານີ້ຖືກພົບເຫັນທັງໃນຮ້ານຄ້າທີ່ຂາຍສິນຄ້າທົ່ວໄປ ແລະ ໃນສາງເກັບສິນຄ້າ.

ທີມງານເຈົ້າໜ້າທີໄດ້ກວດສອບເອກະສານ, ກວດນັບຈຳນວນສິນຄ້າ ແລະ ຖ່າຍຮູບເປັນຫຼັກຖານ. ຫຼັງຈາກກວດກາແລ້ວ, ສິນຄ້າທີ່ຖືກຍຶດໄດ້ຖືກນຳໄປເກັບຮັກສາຢູ່ສາງເພື່ອດຳເນີນການຕາມຂັ້ນຕອນກົດໝາຍຕໍ່ໄປ.

ການລົງກວດການີ້ເປັນສ່ວນໜຶ່ງຂອງມາດຕະການປາບປາມການນຳເຂົ້າ ແລະ ຈຳໜ່າຍສິນຄ້າເຊື່ອຖຸນ ແລະ ສິນຄ້າທີ່ບໍ່ຖືກຕ້ອງຕາມລະບຽບ, ເພື່ອປົກປ້ອງລາຍໄດ້ຂອງລັດ ແລະ ສຸຂະພາບຂອງປະຊາຊົນ.

ເຈົ້າໜ້າທີ່ຂໍໃຫ້ຜູ້ປະກອບການທຸກລາຍ ປະຕິບັດຕາມກົດໝາຍກ່ຽວກັບການນຳເຂົ້າ ແລະ ຈຳໜ່າຍສິນຄ້າຢ່າງເຂັ້ມງວດ. ຖ້າພົບເຫັນການລະເມີດ ຈະຖືກດຳເນີນການຕາມກົດໝາຍຢ່າງເຂັ້ມງວດ.

ທີ່ມາ: ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ຫລວງພະບາງ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວພາຍໃນ · 16:35 ໂມງ · ອ່ານ 4 ຄັ້ງ

ລາວພົບຜູ້ຕິດເຊື້ອ HIV ສະສົມກວ່າ 2.6 ໝື່ນຄົນ ສົ່ງຜົນກະທົບໜັກ 3 ດ້ານຕໍ່ເສດຖະກິດ-ສັງຄົມ



ນະຄອນຫຼວງວຽງຈັນ – ສູນຕ້ານເອດສ໌ ແລະ ພະຍາດຕິດຕໍ່ທາງເພດສຳພັນ ເປີດເຜີຍສະຖິຕິການແຜ່ລະບາດຂອງ HIV/AIDS ທົ່ວ ສປປ ລາວ ນັບແຕ່ປີ 1990 ຫາ ເດືອນສິງຫາ 2026 ພົບວ່າ ມີຜູ້ຕິດເຊື້ອ HIV ສະສົມສູງເຖິງ 26,693 ຄົນ, ໃນນັ້ນມີຜູ້ປ່ວຍເປັນໂລກເອດສ໌ (AIDS) 7,975 ຄົນ ແລະ ມີຜູ້ເສຍຊີວິດສະສົມແລ້ວ 6,335 ຄົນ ຈາກຈຳນວນຜູ້ເຂົ້າຮັບການກວດເລືອດທັງໝົດ 1,835,503 ຄົນ.

ວິກິດການດັ່ງກ່າວ ໄດ້ສົ່ງຜົນກະທົບຢ່າງຮຸນແຮງໃນ 3 ມິຕິຫຼັກ ດັ່ງນີ້:

ດ້ານເສດຖະກິດ ແລະ ແຮງງານ: ສູນເສຍກຳລັງແຮງງານຫຼັກຂອງປະເທດ ເນື່ອງຈາກຜູ້ຕິດເຊື້ອສ່ວນໃຫຍ່ຢູ່ໃນໄວສ້າງຕົວ (ໄວໜຸ່ມ). ຫາກເຂົ້າບໍ່ເຖິງການປິ່ນປົວທັນເວລາ ຈະສົ່ງຜົນໃຫ້ປະສິດທິພາບການເຮັດວຽກຫຼຸດລົງ ແລະ ສູນເສຍລາຍໄດ້.

ດ້ານສາທາລະນະສຸກ ແລະ ງົບປະມານ: ພາລະຄ່າໃຊ້ຈ່າຍຂອງລັດເພີ່ມຂຶ້ນ ໃນການຈັດຊື້ຢາຕ້ານໄວຣັດ (ART), ຢາປ້ອງກັນ (PrEP), ຖົງຢາງອະນາໄມ ແລະ ຄ່າໃຊ້ຈ່າຍທາງຫ້ອງວິເຄາະ, ພ້ອມທັງເພີ່ມຄວາມກົດດັນໃຫ້ແກ່ບຸກຄະລາກອນທາງການແພດໃນການດູແລໄລຍະຍາວ.

ດ້ານຄອບຄົວ ແລະ ສັງຄົມ: ຫຼາຍຄອບຄົວຕ້ອງຂາດລາຍໄດ້ ແລະ ແບກຮັບຄ່າໃຊ້ຈ່າຍໃນການເບິ່ງແຍງ. ນອກນີ້ ຍັງມີຄວາມສ່ຽງໃນການສົ່ງເຊື້ອຈາກແມ່ສູ່ລູກໃນກຸ່ມເຍົາວະຊົນຍິງທີ່ຖືພາ, ລວມທັງບັນຫາການຕີຕາ ແລະ ຈຳແນກໃນສັງຄົມທີ່ເຮັດໃຫ້ຜູ້ຕິດເຊື້ອບໍ່ກ້າເປີດເຜີຍຕົວຕົນ ຫຼື ເຂົ້າຮັບການປິ່ນປົວ.

ມາດຕະການຮັບມື: ພາກສ່ວນກ່ຽວຂ້ອງຕ້ອງເລ່ງຍົກລະດັບການໃຫ້ຄວາມຮູ້ດ້ານສຸຂະພາບທາງເພດໃນກຸ່ມໄວໜຸ່ມ, ຂະຫຍາຍການບໍລິການກວດເຊື້ອ ແລະ ແຈກຢາ PrEP ຟຣີໃຫ້ທົ່ວເຖິງ, ພ້ອມທັງຮຽກຮ້ອງໃຫ້ສັງຄົມຢຸດຕິການຈຳແນກ ເພື່ອດຶງຜູ້ຕິດເຊື້ອເຂົ້າສູ່ລະບົບການປິ່ນປົວໃຫ້ໄວທີ່ສຸດ ພາຍໃຕ້ຄຳຂວັນ “ກວດໄວ ຮູ້ໄວ ປິ່ນປົວໄວ!”

ທີ່ມາ: ສູນຕ້ານເອດສ໌ ແລະ ພະຍາດຕິດຕໍ່ທາງເພດ

ຂ່າວພາຍໃນ · 15:03 ໂມງ · ອ່ານ 2 ຄັ້ງ

ປກສ ເມືອງຈຳປາສັກ ແກ້ໄຂເປົ້າໝາຍລັກຊັບ-ຊື້ຂາຍງົວຄວາຍເຖື່ອນ ຈັບຜູ້ຕ້ອງຫາໄດ້ 3 ຄົນ



ຈຳປາສັກ – ເຈົ້າໜ້າທີ່ຕຳຫຼວດ ປກສ ເມືອງຈຳປາສັກ ແຂວງຈຳປາສັກ ໄດ້ເປີດປະຕິບັດການລົງແກ້ໄຂເປົ້າໝາຍກຸ່ມຄົນລັກຊັບ ແລະ ຊື້-ຂາຍຊັບຢ່າງຜິດກົດໝາຍ (ງົວ, ຄວາຍ) ຢູ່ເຂດບ້ານທາງຄົບ ຕາແສງໝອງວຽນ ເມືອງຈຳປາສັກ ສາມາດມ້າງຄະດີ ແລະ ກັກຕົວຜູ້ຕ້ອງຫາໄດ້ທັງໝົດ 3 ຄົນ.

ການປະຕິບັດງານດັ່ງກ່າວໄດ້ຈັດຂຶ້ນໃນລະຫວ່າງວັນທີ 9 - 21 ຕຸລາ 2026 ທີ່ຜ່ານມາ, ເຊິ່ງເຈົ້າໜ້າທີ່ວິຊາສະເພາະສາມາດຈັບຕົວຜູ້ຕ້ອງຫາໄດ້ດັ່ງນີ້:

ທ້າວ ແສງ ພູນສະຫວັດ ອາຍຸ 55 ປີ, ອາຊີບຊາວນາ, ຢູ່ບ້ານໝອງເດື່ນ ຕາແສງໝອງວຽນ ເມືອງຈຳປາສັກ. (ຖືກກັກຕົວໃນວັນທີ 9 ຕຸລາ 2026 ໃນຂໍ້ກ່າວຫາ: ລັກຊັບ).

ທ້າວ ຈິດ ກິຄຳມະນີ ອາຍຸ 55 ປີ, ອາຊີບຊາວນາ, ຢູ່ບ້ານທາງຄົບ ຕາແສງໝອງວຽນ ເມືອງຈຳປາສັກ. (ຖືກກັກຕົວໃນວັນທີ 9 ຕຸລາ 2026 ໃນຂໍ້ກ່າວຫາ: ລັກຊັບ).

ທ້າວ ແໜ້ ພັນທະວົງ ອາຍຸ 43 ປີ, ອາຊີບຊາວນາ, ຢູ່ບ້ານນາສະຫວ່າງ ຕາແສງດອນຕະລາດ ເມືອງຈຳປາສັກ. (ຖືກກັກຕົວໃນວັນທີ 21 ຕຸລາ 2026 ໃນຂໍ້ກ່າວຫາ: ຊື້-ຂາຍຊັບຢ່າງຜິດກົດໝາຍ).

ປັດຈຸບັນ, ຄະດີດັ່ງກ່າວຍັງຢູ່ໃນຂັ້ນຕອນການດຳເນີນການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ວິຊາສະເພາະ ເພື່ອຂະຫຍາຍຜົນ ແລະ ດຳເນີນຄະດີຕາມຂັ້ນຕອນຂອງກົດໝາຍຕໍ່ໄປ.

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 20 ໃນສະບັບນີ້

◆ ເສດຖະກິດ-ສັງຄົມ · 07:16 ໂມງ · ອ່ານ 18 ຄັ້ງ

Bezz Solution ຈັດສຳມະນາ AI Implementation ເນັ້ນການກຽມຄວາມພ້ອມບຸກຄະລາກອນສູ່ຍຸກດິຈິຕອນ



Bezz Solution ຈັດງານສຳມະນາແລກປ່ຽນຄວາມຮູ້ພາຍໃຕ້ຫົວຂໍ້ “AI Implementation: Preparing Your People for the Digital Shift” ໃນວັນທີ 3 ພະຈິກ 2026 ເພື່ອສົ່ງເສີມຄວາມເຂົ້າໃຈກ່ຽວກັບການນຳໃຊ້ປັນຍາປະດິດ (AI) ໃນພາກທຸລະກິດ ພ້ອມທັງການກະກຽມບຸກຄະລາກອນໃຫ້ສາມາດປັບຕົວຮອງຮັບການປ່ຽນແປງສູ່ຍຸກດິຈິຕອນ.

ງານສຳມະນາຈັດຂຶ້ນໃນເວລາ 09:30–11:30 ໂມງ ໂດຍມີວິທະຍາກອນຮ່ວມແບ່ງປັນຄວາມຮູ້ 2 ທ່ານ ປະກອບມີ ດຣ. ສອນໄຊຍາ ເພັດລາສີ (Dr. Sonexaiya Phetlasy) ຜູ້ຊ່ຽວຊານດ້ານ Machine Learning ລະດັບປະລິນຍາເອກ ແລະ ທ່ານ Nick Mounalard ນັກຍຸດທະສາດອົງກອນ (Corporate Strategist) ທີ່ໄດ້ຮ່ວມນຳສະເໜີມຸມມອງທັງດ້ານເຕັກໂນໂລຊີ ແລະການບໍລິຫານຈັດການອົງກອນ.

ເນື້ອໃນການສຳມະນາໄດ້ເນັ້ນໃຫ້ເຫັນວ່າ ການນຳ AI ມາໃຊ້ໃນອົງກອນບໍ່ແມ່ນພຽງແຕ່ການຈັດຫາເຄື່ອງມື ຫຼືເຕັກໂນໂລຊີໃໝ່ເຂົ້າມາໃຊ້ເທົ່ານັ້ນ ແຕ່ຍັງຕ້ອງອາໄສການປັບປ່ຽນແນວຄິດ ວິທີການເຮັດວຽກ ແລະການພັດທະນາທັກສະຂອງພະນັກງານ ເພື່ອໃຫ້ສາມາດນຳໃຊ້ AI ໃນວຽກງານຕົວຈິງໄດ້ຢ່າງມີປະສິດທິຜົນ.

ນອກຈາກນີ້ ຍັງໄດ້ມີການແລກປ່ຽນມຸມມອງກ່ຽວກັບບົດບາດຂອງ AI ໃນການປັບປຸງຂະບວນການເຮັດວຽກ ການບໍລິຫານຈັດການ ແລະການວາງຍຸດທະສາດຂອງອົງກອນ ໂດຍມຸ່ງເນັ້ນໃຫ້ຜູ້ບໍລິຫານເຫັນເຖິງຄວາມສຳຄັນຂອງການກະກຽມຄົນຄວບຄູ່ໄປກັບການລົງທຶນດ້ານເຕັກໂນໂລຊີ.

ການຈັດງານຄັ້ງນີ້ມີຜູ້ເຂົ້າຮ່ວມຈາກຫຼາຍພາກສ່ວນ ລວມທັງເຈົ້າຂອງກິດຈະການ ຜູ້ບໍລິຫານ ແລະຜູ້ທີ່ເຮັດວຽກດ້ານບຸກຄະລາກອນ ຊຶ່ງເປັນກຸ່ມສຳຄັນໃນການຂັບເຄື່ອນການປ່ຽນແປງພາຍໃນອົງກອນ.

ທ່ານກ່າວການປ່ຽນແປງຂອງເຕັກໂນໂລຊີທີ່ເກີດຂຶ້ນຢ່າງວ່ອງໄວ AI ກຳລັງກາຍເປັນປັດໃຈສຳຄັນທີ່ສົ່ງຜົນຕໍ່ວິທີການດຳເນີນທຸລະກິດ. ສຳລັບອົງກອນທີ່ຕ້ອງການປັບຕົວໃຫ້ທັນກັບຍຸກໃໝ່ ການພັດທະນາທັກສະຂອງບຸກຄະລາກອນ ແລະການສ້າງວັດທະນະທຳອົງກອນທີ່ເປີດຮັບເຕັກໂນໂລຊີ ຈຶ່ງເປັນອີກໜຶ່ງປັດໃຈສຳຄັນຕໍ່ການເພີ່ມຂີດຄວາມສາມາດໃນການແຂ່ງຂັນຂອງພາກທຸລະກິດລາວໃນອະນາຄົດ.

ໂຄສະນາ
ລົງໂຄສະນາ ໃນ ມະຫາສານ ລາຍວັນ
ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ
WhatsApp 020 5888 6182

◆ ເສດຖະກິດ-ສັງຄົມ · 14:31 ໂມງ · ອ່ານ 5 ຄັ້ງ

ລາວ-ຫວຽດນາມ ຮ່ວມມືວຽກງານຄຸ້ມຄອງຊັບສິນແຫ່ງລັດ



ກອງປະຊຸມຮ່ວມມືທາງດ້ານວິຊາການລະຫວ່າງ ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ແຫ່ງ ສປປ ລາວ ແລະ ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ ແຫ່ງ ສສ ຫວຽດ ນາມ ຈັດຂຶ້ນໃນວັນທີ 3 ພະຈິກ 2026, ຝ່າຍລາວ ນຳໂດຍ ທ່ານ ທຳມະລິດ ຣາຊະພົນ ຫົວໜ້າກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ແລະ ຝ່າຍຫວຽດນາມ ນຳໂດຍ ທ່ານ ຫງວ໋ຽນ ເຕີນ ທົ້ງ ຫົວໜ້າກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ ສສ ຫວຽນນາມ, ມີຄະນະຮັບຜິດຊອບ ກ່ຽວ ຂ້ອງເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ຈັດຂຶ້ນເພື່ອຍົກລະດັບ ແລະ ຜັນ ຂະຫຍາຍວຽກງານຮ່ວມມືດ້ານວິຊາການ ໃນຂົງເຂດການ ຄຸ້ມຄອງຊັບສິນແຫ່ງລັດ ຊຶ່ງສອງຝ່າຍໄດ້ໃຫ້ຄວາມສຳຄັນ ໃນການແລກປ່ຽນບົດຮຽນ ແລະ ປະສົບການຕົວຈິງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານວິຊາສະເພາະ, ການ ສ້າງ ແລະ ປັບປຸງນິຕິກຳກ່ຽວຂ້ອງ ເພື່ອຮັບປະກັນໃຫ້ການ ຄຸ້ມຄອງ, ຕິດຕາມ ແລະ ບຳລຸງຮັກສາ ຊັບສິນຂອງລັດ ໃຫ້ມີປະສິທິພາບ, ໂປ່ງ ໃສ, ປະຢັດ ແລະ ມີປະສິດທິຜົນ. ພ້ອມກັນນັ້ນ, ຍັງເປັນການສືບຕໍ່ເສີມ ຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງ ໃຫຍ່, ຄວາມສາມັກຄີພິເສດ, ການ ຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນ ຍຸດທະສາດ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ, ການຮ່ວມມືອັນໃກ້ຊິດ ລະຫວ່າງ ສອງກະຊວງການເງິນ ໃຫ້ແໜ້ນ ແຟ້ນຍິ່ງຂຶ້ນ. ກອງປະຊຸມດັ່ງກ່າວ, ບໍ່ພຽງ ແຕ່ເປັນການແລກປ່ຽນດ້ານວິຊາການເທົ່າ ນັ້ນ, ແຕ່ຍັງເປັນຂີດໝາຍສຳຄັນໃນການ ກະກຽມ ແລະ ຜັນຂະ ຫຍາຍແຜນງານ ຮ່ວມມືໄລຍະຍາວ ລະຫວ່າງບັນດາກົມທີ່ ກ່ຽວຂ້ອງກະຊວງ ໃຫ້ມີຄວາມໜັກ ແໜ້ນ, ທັນສະໄໝ ແລະ ຕອບສະໜອງ ໄດ້ກັບຄວາມຮຽກຮ້ອງຕ້ອງການໃນຍຸກ ການຫັນເປັນດິຈິຕອນ ແລະ ການ ພັດທະນາເສດຖະກິດ-ສັງຄົມ ໃນໄລຍະ ໃໝ່.

ໃນຕອນທ້າຍຂອງກອງປະຊຸມ, ຄະນະວິຊາການທັງສອງປະເທດ ໄດ້ ສົນທະນາປະກອບຄຳຄິດເຫັນຮ່ວມກັນ ກ່ຽວກັບ ແຜນການຮ່ວມມືສອງຝ່າຍໃນປີ 2027, ພ້ອມທັງກະກຽມເນື້ອໃນ ໄປສູ່ ການລ່ວງ ແລະ ລົງນາມໃນບົດບັນທຶກ ຊ່ວຍຈຳ (MOU) ເພື່ອເປັນບ່ອນອີງໃນ ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ວຽກງານການຄຸ້ມຄອງຊັບສິນແຫ່ງລັດຂອງ ສອງປະເທດ ໃຫ້ມີຄວາມເຂັ້ມແຂງ ແລະ ຍືນຍົງຍິ່ງໆຂຶ້ນ.

◆ ເສດຖະກິດ-ສັງຄົມ · 14:56 ໂມງ · ອ່ານ 2 ຄັ້ງ

ເລັ່ງປັບປຸງທາງເລກ 13 ໃຕ້! ໂຄງການປູຢາງຂົ້ວຊ່ອງໄຊທານີ-ປາກງື່ມ ກຳລັງຊຸ້ມຂ້ຽວ ຍົກລະດັບຖະໜົນໃຫ້ສັນຈອນ ສະດວກ ແລະ ປອດໄພຍິ່ງຂຶ້ນ.



ອີງຕາມຂໍ້ມູນທີ່ລັດວິສະຫາກິດກໍ່ສ້າງທາງເລກ 8 ໃຫ້ຮູ້ວ່າ: ໂຄງການປັບປຸງເສັ້ນທາງຫຼວງແຫ່ງຊາດເລກທີ 13 ໃຕ້ ມາຮອດປັດຈຸບັນທາງໂຄງການຜູ້ຮັບເໝົາກໍ່ສ້າງກໍ່ ຄືລັດວິສະຫະກິດກໍ່ສ້າງທາງເລກ 8 ໄດ້ກຳລັງຊຸ້ນຂ້ຽວລົງ ຢາງຂົ້ວ (ອັດຟານຊັ້ນ 1) ນັບແຕ່ກິແມັດທີ 24 ຫາ ກິໂລແມັດທີ 28 ແລະ ອີກຈຸດໄລຍະທາງແຕ່ກິໂລແມັດທີ 28 ເມືອງໄຊທານີຫາກິໂລແມັດທີ 50,2 ເມືອງປາກງື່ມ ນະຄອນຫຼວງວຽງຈັນ ໂດຍບໍລິສັດ ຮ່ວມທຶນລະຫວ່າງລັດ ວິສະຫາກິດກໍ່ສ້າງທາງເລກ 8 ແລະ ບໍລັດ ສົມໄຊຈະເລີນ ການກໍ່ສ້າງ ເຊິ່ງເປັນບໍລິສັດທີ່ຮັບເໝົາກໍ່ສ້າງໂຄງການດັ່ງ ກ່າວກຳລັງພວມດຳເນີນການກໍ່ສ້າງເລັ່ງຂະຫຍາຍບ່າທາງ ຍົກລະດັບເສັ້ນທາງອາດຈະສ້າງຄວາມຫຍຸ້ງຍາກໃນການ ກໍ່ສ້າງ ດັ່ງນັ້ນຈຶ່ງຮຽກຮ້ອງມາຍັງຜູ້ໃຊ້ລົດໃຊ້ຖະໜົນຈົ່ງຂັບ ຂີ່ຄ່ອຍໄປຄ່ອຍມາໃນການເດີນທາງດ້ວຍທັ້ງນີ້ເພື່ອຫຼີກລ່ຽງ ການເກີດອຸບັດເຫດ.

ຂ່າວ: ສົມສະຫວັນ

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ສາລະໜ້າຮູ້ · 16:10 ໂມງ · ອ່ານ 13 ຄັ້ງ

ໃນລະຫວ່າງ 72 ຊົ່ວໂມງ ຫາ 10 ມື້ ເປັນຫຍັງຫຼາຍປະເທດຈຶ່ງແນະນຳໃຫ້ປະຊາຊົນສຳຮອງອາຫານໄວ້ ເພື່ອຮອງຮັບສະຖານະການສຸກເສີນ?



ນອກເໜືອຈາກການຮັບມືກັບສົງຄາມແລ້ວ ຫຼາຍປະເທດຍັງກຳນົດ ຫຼື ແນະນຳໃຫ້ຄົວເຮືອນກະກຽມອາຫານ, ນ້ຳດື່ມ ແລະ ສິ່ງຂອງຈຳເປັນອື່ນໆ ໄວ້ສຳລັບການດຳລົງຊີວິດໃນໄລຍະຕົ້ນ ຫາກເກີດວິກິດການຂຶ້ນ.

ສະຫະພາບເອີຣົບໄດ້ອອກຄຳແນະນຳໃຫ້ປະຊາຊົນຮູ້ວິທີຮັບມືກັບເຫດສຸກເສີນ ໂດຍເນັ້ນໃຫ້ປະຊາຊົນສາມາດພຶ່ງພາຕົນເອງໄດ້ພາຍໃນ 72 ຊົ່ວໂມງ.

ໃນວັນທີ 3 ພະຈິກ 2026 ຄະນະກຳມາທິການເອີຣົບໄດ້ເຜີຍແຜ່ແນວທາງໃໝ່ ເພື່ອຊ່ວຍໃຫ້ປະຊາຊົນ ແລະ ຊຸມຊົນມີຄວາມພ້ອມຫຼາຍຂຶ້ນໃນການຮັບມືກັບເຫດສຸກເສີນ.

ເນື້ອໃນສຳຄັນຂອງເອກະສານສະບັບນີ້ ແມ່ນການກຳນົດໃຫ້ປະເທດສະມາຊິກສະໜັບສະໜຸນປະຊາຊົນ ໃຫ້ສາມາດພຶ່ງພາຕົນເອງໄດ້ຢ່າງໜ້ອຍ 72 ຊົ່ວໂມງ ໃນຂະນະທີ່ລະບົບຊ່ວຍເຫຼືອສາທາລະນະກຳລັງລະດົມກຳລັງພົນ ແລະ ຈັດລະບຽບການເຂົ້າເຖິງພື້ນທີ່ປະສົບໄພ.

ແນວທາງດັ່ງກ່າວນຳສະເໜີໂດຍ ນາງ ຮາຈາ ລາຮບິບ (Hadja Lahbib) ກຳມາທິການຝ່າຍຄວາມສະເໝີພາບ, ການກຽມຄວາມພ້ອມ ແລະ ການຈັດການວິກິດການ ໂດຍມີເປົ້າໝາຍໃຫ້ບຸກຄົນ ແລະ ຊຸມຊົນມີຄວາມຮູ້ ພ້ອມທັງເຄື່ອງມືທີ່ຈຳເປັນ ເພື່ອປົກປ້ອງຕົນເອງ ແລະ ຜູ້ອື່ນໃນສະຖານະການສຸກເສີນ.

ໜຶ່ງໃນບຸລິມະສິດຫຼັກ ແມ່ນການສົ່ງເສີມໃຫ້ປະຊາຊົນສາມາດດູແລຕົນເອງໄດ້ພາຍໃນ 72 ຊົ່ວໂມງ ໂດຍກະກຽມສິ່ງຈຳເປັນໃຫ້ພຽງພໍສຳລັບສາມມື້ທຳອິດຂອງວິກິດການ.

ຄະນະກຳມາທິການແນະນຳໃຫ້ປະຊາຊົນກະກຽມຊຸດອຸປະກອນສຸກເສີນ ແລະ ຊຸດປະຖົມພະຍາບານສ່ວນຕົວ ເພື່ອໃຫ້ໝັ້ນໃຈວ່າມີຊັບພະຍາກອນພຽງພໍທັນທີຫຼັງເກີດໄພພິບັດ.

ອີກປະເດັນສຳຄັນໜຶ່ງ ແມ່ນການໃຫ້ຄວາມຮູ້ດ້ານການກຽມຄວາມພ້ອມ ໂດຍສະເໜີໃຫ້ປະເທດສະມາຊິກບູລະນາການເນື້ອຫາການກຽມຮັບມືກັບເຫດສຸກເສີນ ເຂົ້າໃນຫຼັກສູດການສຶກສາລະດັບປະຖົມໄວ ແລະ ປະຖົມສຶກສາ.

ໄລຍະເວລາ 72 ຊົ່ວໂມງບໍ່ແມ່ນການກຳນົດຂຶ້ນມາໂດຍບັງເອີນ. ໂດຍປົກກະຕິ ນີ້ແມ່ນຊ່ວງເວລາທີ່ເຈົ້າໜ້າທີ່ຕ້ອງປະເມີນຂະໜາດຂອງເຫດການ, ກຳນົດພື້ນທີ່ທີ່ຕ້ອງໃຫ້ຄວາມຊ່ວຍເຫຼືອກ່ອນ, ລະດົມກຳລັງເຈົ້າໜ້າທີ່, ຟື້ນຟູການຈະລາຈອນ ແລະ ຈັດຕັ້ງເສັ້ນທາງຂົນສົ່ງຊົ່ວຄາວ.

ຖ້າຄົວເຮືອນສາມາດຕອບສະໜອງຄວາມຕ້ອງການຂັ້ນພື້ນຖານຂອງຕົນເອງໄດ້ໃນໄລຍະນີ້ ທີມກູ້ໄພກໍຈະສາມາດມຸ່ງເນັ້ນຊັບພະຍາກອນໄປຊ່ວຍເຫຼືອຜູ້ບາດເຈັບ, ຜູ້ສູງອາຍຸ, ເດັກນ້ອຍ, ຄົນພິການ ແລະ ກຸ່ມຄົນທີ່ມີຄວາມສ່ຽງສູງທີ່ສຸດໄດ້.

ແນວທາງຂອງສະຫະພາບເອີຣົບນີ້ ເປັນສ່ວນໜຶ່ງຂອງຍຸດທະສາດການກຽມຄວາມພ້ອມຂອງສະຫະພາບ ຊຶ່ງໄດ້ຮັບການອະນຸມັດໃນເດືອນມີນາ 2025. ຍຸດທະສາດນີ້ຍຶດຫຼັກການ “ຄວາມສ່ຽງທຸກດ້ານ” ແລະ “ການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ”. ຕາມການລະບຸຂອງຄະນະກຳມາທິການເອີຣົບ ສະພາບຄວາມສ່ຽງໃນປັດຈຸບັນໄດ້ຮັບອິດທິພົນຈາກຄວາມຜັນຜວນທາງພູມລັດຖະສາດ, ການປ່ຽນແປງສະພາບດິນຟ້າອາກາດ, ການປ່ຽນແປງທາງເຕັກໂນໂລຊີຢ່າງວ່ອງໄວ ແລະ ແຮງກົດດັນຕໍ່ຄວາມສາມາດໃນການຮັບມືຂອງສັງຄົມ ເຊິ່ງເກີດຂຶ້ນພ້ອມໆກັນ.

ນອກຈາກນີ້ ນະຄອນບຣັດເຊວ (Brussels) ຍັງມີແຜນຈັດງານວັນກຽມຄວາມພ້ອມຂອງສະຫະພາບເອີຣົບເປັນປະຈຳທຸກປີ ໂດຍຄັ້ງທຳອິດຈະຈັດຂຶ້ນໃນເດືອນຕຸລາ 2027.

ແຕ່ລະປະເທດມີແຜນສຳຮອງຂອງຕົນເອງ

ໃນສະຫະລາຊະອານາຈັກ ແຄມເປນລະດັບຊາດ “Be Ready” ຫຼື “ຈົ່ງກຽມພ້ອມ” ໄດ້ເປີດຕົວໃນວັນທີ 22 ຕຸລາ 2026 ໂດຍກະຕຸ້ນໃຫ້ແຕ່ລະຄົວເຮືອນກຽມພ້ອມຮັບມືກັບການຢຸດຊະງັກຂອງບໍລິການປະຈຳວັນ ເຊັ່ນ: ໄຟຟ້າ, ນ້ຳປະປາ, ໂທລະສັບ ແລະ ອິນເຕີເນັດ ເປັນເວລາ 3 ມື້.

ຫຼາຍປະເທດກຳລັງຮຽກຮ້ອງໃຫ້ປະຊາຊົນກຽມພ້ອມຮັບມືກັບຄວາມຂັດຂ້ອງທີ່ອາດເກີດຂຶ້ນກັບລະບົບສຳຄັນຕ່າງໆ.

ລັດຖະບານອັງກິດເນັ້ນຢ້ຳວ່າ ນີ້ເປັນພຽງການກະກຽມຂັ້ນພື້ນຖານເທົ່ານັ້ນ ໂດຍຄ່ອຍໆດຳເນີນການໄປທີລະຂັ້ນ ບໍ່ແມ່ນການຮຽກຮ້ອງໃຫ້ປະຊາຊົນຊື້ສິນຄ້າຈຳນວນຫຼາຍມາກັກຕຸນ.

ແນວທາງທາງການຂອງສະຫະລາຊະອານາຈັກແນະນຳໃຫ້ສຳຮອງອາຫານທີ່ບໍ່ເນົ່າເສຍງ່າຍໄວ້ສຳລັບ 3 ມື້ ໂດຍເນັ້ນອາຫານທີ່ບໍ່ຈຳເປັນຕ້ອງແຊ່ເຢັນ ຫຼື ປຸງໃຫ້ສຸກ ເຊັ່ນ: ຊີ້ນກະປ໋ອງ, ປາກະປ໋ອງ, ຜັກກະປ໋ອງ, ຖົ່ວ ແລະ ໝາກໄມ້ແຫ້ງ.

ແຕ່ລະຄົນຕ້ອງການນ້ຳດື່ມປະມານ 3 ລິດຕໍ່ມື້ ຫຼື ລວມເປັນ 9 ລິດສຳລັບ 3 ມື້ ໂດຍຍັງບໍ່ລວມນ້ຳທີ່ໃຊ້ປຸງອາຫານ ແລະ ນ້ຳສຳລັບສຸຂະອະນາໄມ.

ນອກນີ້ ຍັງແນະນຳໃຫ້ຄອບຄົວກະກຽມຢາທີ່ຈຳເປັນ, ໄຟສາຍ, ແບັດເຕີຣີສຳຮອງ, ວິທະຍຸທີ່ໃຊ້ແບັດເຕີຣີ ຫຼື ແບບໝຸນມື, ເງິນສົດ, ນົມສຳລັບເດັກອ່ອນ ແລະ ອາຫານສັດລ້ຽງ.

ສ່ວນປະເທດສະວີເດນກຳນົດເປົ້າໝາຍໄວ້ສູງກວ່ານັ້ນ ໂດຍແນະນຳໃຫ້ປະຊາຊົນສາມາດຕອບສະໜອງຄວາມຕ້ອງການຂັ້ນພື້ນຖານຂອງຕົນເອງໄດ້ຢ່າງ

ຕໍ່ໜ້າ 11

ໃນລະຫວ່າງ 72 ຊົ່ວໂມງ ຫາ 10 ມື ເປັນຫຍັງຫຼາຍປະເທດຈຶ່ງ... (ຕໍ່ຈາກໜ້າ 10)

ໜ້ອຍ 1 ອາທິດ ໃນກໍລະນີເກີດອີກິດການ ຫຼື ສົງຄາມ.

ຄູ່ມື “ເມື່ອເກີດອີກິດການ ຫຼື ສົງຄາມ” ທີ່ແຈກຢາຍໃຫ້ທຸກຄົວເຮືອນລະບຸວ່າ ຊັບພະຍາກອນຂອງພາກລັດບໍ່ສາມາດຊ່ວຍເຫຼືອທຸກຄົນໄດ້ພ້ອມກັນ. ດັ່ງນັ້ນ ຜູ້ທີ່ສາມາດດູແລຕົນເອງໄດ້ ຈຶ່ງຄວນກຽມພ້ອມລ່ວງໜ້າ ເພື່ອໃຫ້ເຈົ້າໜ້າທີ່ສາມາດຈັດລຳດັບຄວາມສຳຄັນໃນການຊ່ວຍເຫຼືອຜູ້ທີ່ຮີບດ່ວນກວ່າ.

ລາຍການສິ່ງຂອງທີ່ອົງການປ້ອງກັນໄພພົນລະເຮືອນຂອງສະວິເດນແນະນຳປະກອບມີ:

ອາຫານສຳຮອງຢ່າງໜ້ອຍ 1 ອາທິດ

ນ້ຳດື່ມບັນຈຸຂວດ ຫຼື ກະປ໋ອງ

ເຕົາແກ๊ສສຳລັບຕັ້ງແຄັມ

ຖົງນອນ ແລະ ຜ້າຫົ່ມ

ວິທະຍຸໃຊ້ແບັດເຕີຣີ ແລະ ໄຟສາຍ

ຊຸດປະຖົມພະຍາບານ ແລະ ຢາປະຈຳຕົວ

ເງິນສົດ ແລະ ແບັດເຕີຣີສຳຮອງ (Power bank)

ເບີໂທລະສັບສຳຄັນທີ່ຂຽນໄວ້ໃນເຈ້ຍ

ລາຍງານກໍລະນີສຶກສາທີ່ເຜີຍແຜ່ໂດຍອົງການດັ່ງກ່າວ ໄດ້ຈຳລອງສະຖານະການທີ່ປະຊາຊົນຕ້ອງປະເຊີນກັບການຂາດໄຟຟ້າ, ນ້ຳປະປາ, ອິນເຕີເນັດ, ລະບົບຊຳລະເງິນ ແລະ ລະບົບຄວາມຮ້ອນພ້ອມກັນເປັນເວລາ 7 ມື້.

ເຢຍລະມັນກຽມພ້ອມສຳລັບການດຳລົງຊີວິດໂດຍບໍ່ພຶ່ງພາພາຍນອກເຖິງ 10 ມື້

ເຢຍລະມັນເປັນໜຶ່ງໃນປະເທດທີ່ມີແຜນຮັບມືເຫດສຸກເສີນໃນໄລຍະຍາວທີ່ສຸດ. ອົງການຄຸ້ມຄອງພິນລະເຮືອນ ແລະ ບັນເທົາທຸກໄພພິບັດແຫ່ງສະຫະພັນເຢຍລະມັນ (BBK) ແນະນຳໃຫ້ແຕ່ລະຄົວເຮືອນສຳຮອງອາຫານ ແລະ ເຄື່ອງດື່ມໃຫ້ພຽງພໍສຳລັບ 10 ມື້. ສ່ວນປະຊາຊົນໃນເຂດທີ່ປະສົບບັນຫານ້ຳຖ້ວມຂັງ ກໍແນະນຳໃຫ້ສຳຮອງນ້ຳໃຫ້ພຽງພໍສຳລັບຫຼາຍມື້.

ແນວທາງຂອງ BBK ປະເມີນວ່າ ຄວນດື່ມນ້ຳປະມານ 2 ລິດຕໍ່ຄົນຕໍ່ມື້ ຫຼື ປະມານ 14 ລິດຕໍ່ອາທິດ.

ທາງການເຢຍລະມັນໄດ້ກຳນົດສະຖານະການສ່ຽງທີ່ອາດເກີດຂຶ້ນຫຼາຍຮູບແບບ ເຊັ່ນ:

ນ້ຳຖ້ວມຈົນຖະໜົນຫົນທາງບໍ່ສາມາດສັນຈອນໄດ້

ຫິມະຕົກໜັກຈົນສິນຄ້າໃນຊຸບເປີມາເກັດຂາດແຄນ

ໄຟຟ້າດັບເປັນວົງກ້ວ້າງ ຈົນລະບົບບໍລິການສາທາລະນະເປັນອຳມະພາດ

ຫ່ວງໂສ້ການສະໜອງສິນຄ້າຢຸດຊະງັກຈາກການລະບາດຂອງພະຍາດ, ໄພແຫ້ງແລ້ງ ແລະ ການໂຈມຕີທາງໄຊເບີ

BBK ບໍ່ໄດ້ແນະນຳໃຫ້ປະຊາຊົນຊື້ອາຫານທີ່ບໍ່ຄຸ້ນເຄີຍມາເກັບໄວ້ໃນສາງ. ແຕ່ຄວນສຳຮອງສະເພາະສິນຄ້າທີ່ໃຊ້ປະຈຳໃນຄົວເຮືອນ ທີ່ສາມາດເກັບໄວ້ໄດ້ດົນ, ບໍ່ຈຳເປັນຕ້ອງແຊ່ເຢັນ ແລະ ສ່ວນໃຫຍ່ສາມາດກິນໄດ້ໂດຍບໍ່ຕ້ອງປຸງສຸກ ໃນກໍລະນີໄຟຟ້າ ຫຼື ແກ๊ສດັບ.

ປະຊາຊົນຍັງໄດ້ຮັບຄຳແນະນຳໃຫ້ວາງສິນຄ້າທີ່ຊື້ໃໝ່ໄວ້ທາງດ້ານຫຼັງ ແລະ ໃຊ້ສິນຄ້າເກົ່າກ່ອນ ຈາກນັ້ນຈຶ່ງຊື້ສິນຄ້າໃໝ່ມາເຕີມແທນສ່ວນທີ່ໃຊ້ໄປ ເພື່ອສ້າງລະບົບສຳຮອງອາຫານແບບໝຸນວຽນ ແທນທີ່ຈະປ່ອຍໃຫ້ອາຫານໝົດອາຍຸ ແລະ ຕ້ອງຖິ້ມ.

ຍີ່ປຸ່ນ ແລະ ບົດຮຽນຈາກໄພພິບັດຄັ້ງໃຫຍ່

ປະເທດຍີ່ປຸ່ນ ເປັນປະເທດທີ່ປະເຊີນກັບແຜ່ນດິນໄຫວ, ຊຸນາມິ ແລະ ພາຍຸໄຕ້ຝຸ່ນເລື້ອຍໆ. ລັດຖະບານຈຶ່ງແນະນຳໃຫ້ແຕ່ລະຄອບຄົວສຳຮອງອາຫານ ແລະ ນ້ຳດື່ມໃຫ້ພຽງພໍຢ່າງໜ້ອຍ 3 ມື້ ຫຼື ຖ້າເປັນໄປໄດ້ ຄວນສຳຮອງໄວ້ໃຫ້ພຽງພໍ 1 ອາທິດ.

ປະລິມານນ້ຳດື່ມທີ່ແນະນຳແມ່ນ 3 ລິດຕໍ່ຄົນຕໍ່ມື້.

ນອກນີ້ ຍັງແນະນຳໃຫ້ປະຊາຊົນກະກຽມເຕົາແກ๊ສຂະໜາດນ້ອຍ, ຫ້ອງນ້ຳແບບພົກພາ, ຊຸດຊັ້ນໃນ, ເຈ້ຍອະນາໄມ, ຢາທີ່ໃຊ້ເປັນປະຈຳ ແລະ ກະເປົ໋າສຸກເສີນທີ່ສາມາດຫິ້ວຕິດຕົວໄປໄດ້ທັນທີເມື່ອຕ້ອງອົບພະຍົບ.

ວິທີການຂອງຊາວຍີ່ປຸ່ນແມ່ນ “ການສຳຮອງແບບໝຸນວຽນ” (Stockpiling Rotation) ແທນທີ່ຈະຊື້ສິນຄ້າມາເຕັມຕູ້ແລ້ວປ່ອຍປະໄວ້ຈົນລືມ ຄອບຄົວຈະຊື້ສິນຄ້າທີ່ໃຊ້ໃນຊີວິດປະຈຳວັນເພີ່ມຂຶ້ນເລັກນ້ອຍ ໂດຍໃຊ້ສິນຄ້າທີ່ໃກ້ໝົດອາຍຸກ່ອນ ແລ້ວຈຶ່ງຊື້ມາເຕີມສະເພາະຈຳນວນທີ່ໃຊ້ໄປ.

ປະສົບການຂອງຍີ່ປຸ່ນຍັງສະທ້ອນໃຫ້ເຫັນວ່າ ຊຸບເປີມາເກັດ ແລະ ຮ້ານສະດວກຊື້ອາດຈະສິນຄ້າໝົດຢ່າງວ່ອງໄວ ຫຼັງເກີດໄພພິບັດຄັ້ງໃຫຍ່. ສ່ວນສິ່ງຂອງບັນເທົາທຸກຈາກລັດຖະບານກໍອາດຈະຍັງສົ່ງມາບໍ່ເຖິງໃນທັນທີ ໂດຍສະເພາະເມື່ອຖະໜົນຫົນທາງ, ທ່າເຮືອ ຫຼື ລະບົບການສື່ສານໄດ້ຮັບຄວາມເສຍຫາຍ.

ດັ່ງນັ້ນ ຕູ້ເຢັນ, ຕູ້ແຊ່ແຂງ ແລະ ອາຫານທົ່ວໄປທີ່ມີຢູ່ໃນຫ້ອງຄົວ ຈຶ່ງຖືເປັນແຫຼ່ງສຳຮອງອາຫານດ່ານທຳອິດ ກ່ອນທີ່ຈະນຳໃຊ້ອາຫານແຫ້ງ, ອາຫານກະປ໋ອງ ຫຼື ອາຫານທີ່ຜ່ານການເຮັດໃຫ້ແຫ້ງແຊ່ເຢັນ (Freeze-dried food).

ນິທັດສະການສະແດງມາດຕະການກຽມຄວາມພ້ອມຮັບມືກັບເຫດສຸກເສີນໃນລັດອໍຣິກອນ (Oregon) ສະຫະລັດອາເມລິກາ

ສະຫະລັດອາເມລິກາເນັ້ນການສຳຮອງນ້ຳ, ອາຫານ ແລະ ຄວາມສາມາດໃນການດຳລົງຊີວິດໂດຍບໍ່ຕ້ອງພຶ່ງພາໄຟຟ້າ

ໃນສະຫະລັດອາເມລິກາ ເວັບໄຊທ໌ Ready.gov ເຊິ່ງເປັນຄູ່ມືທາງການຂອງລັດຖະບານກາງ ແນະນຳໃຫ້ແຕ່ລະຄອບຄົວສຳຮອງອາຫານ, ນ້ຳດື່ມ ແລະ ເຄື່ອງຂອງຈຳເປັນໃຫ້ພຽງພໍສຳລັບຫຼາຍມື້.

ປະລິມານນ້ຳດື່ມທີ່ແນະນຳແມ່ນ 1 ກາລອນ ຫຼື ປະມານ 3.8 ລິດ ຕໍ່ຄົນຕໍ່ມື້.

ສ່ວນອາຫານສຳຮອງຄວນປະກອບມີ:

ຊີ້ນກະປ໋ອງ

ໝາກໄມ້ ແລະ ຜັກກະປ໋ອງ

ແຫ່ງອາຫານເສີມໂພຊະນາການ

ທັນຍາພືດແຫ້ງ

ເນີຍຖົ່ວດິນ

ໝາກໄມ້ອົບແຫ້ງ

ນົມພາສເจิไรส์ (ນົມທີ່ຜ່ານການຂ້າເຊື້ອ)

ອາຫານສຳລັບເດັກອ່ອນ

ລາຍການສິ່ງຂອງຈຳເປັນສຳລັບເຫດສຸກເສີນຂອງສະຫະລັດ ຍັງລວມເຖິງວິທະຍຸທີ່ໃຊ້ແບັດເຕີຣີ, ໄຟສາຍ, ຊຸດປະຖົມພະຍາບານ, ໜ້າກາກກັນຝຸ່ນ, ທີ່ເປີດກະປ໋ອງ, ແຜນທີ່ທ້ອງຖິ່ນ, ຢາຕາມໃບສັ່ງແພດ, ເງິນສົດ, ເອກະສານສຳຄັນຂອງຄອບຄົວ, ຜ້າຫົ່ມອຸ່ນໆ ແລະ ສິ່ງຂອງສະເພາະສຳລັບຜູ້ສູງອາຍຸ, ເດັກນ້ອຍ ແລະ ສັດລ້ຽງ.

ຂໍ້ຄິດຮ່ວມກັນຈາກຄຳແນະນຳຂອງຫຼາຍປະເທດ

ປະເດັນສຳຄັນທີ່ປາກົດຄືກັນໃນຄຳແນະນຳຂອງຫຼາຍປະເທດ ແມ່ນການບໍ່ສົ່ງເສີມໃຫ້ປະຊາຊົນຟ້າວຊື້ອາຫານມາກັກຕຸນໃນປະລິມານຫຼາຍເກີນໄປ.

ສານທີ່ລັດຖະບານຕ້ອງການສື່ສານກັບປະຊາຊົນ ບໍ່ແມ່ນວ່າ “ໄພພິບັດກຳລັງຈະເກີດຂຶ້ນ” ແຕ່ແມ່ນການເຕືອນໃຫ້ຮູ້ວ່າ ວິກິດການສາມາດເກີດຂຶ້ນໄດ້ຫຼາຍຮູບແບບ ແລະ ລັດຖະບານອາດບໍ່ສາມາດໃຫ້ຄວາມຊ່ວຍເຫຼືອແກ່ທຸກຄົນໄດ້ຢ່າງທັນທ່ວງທີ.

ປະຊາຊົນຈຶ່ງຈຳເປັນຕ້ອງມີຄວາມຕື່ນຕົວ ແລະ ກະຕືລືລົ້ນໃນການກຽມຮັບມືກັບໄພພິບັດທາງທຳມະຊາດ, ໄຟຟ້າດັບ, ການໂຈມຕີທາງໄຊເບີ, ການຢຸດຊະງັກຂອງຫ່ວງໂສ້ການສະໜອງສິນຄ້າ ແລະ ເຫດການບໍ່ຄາດຄິດດ້ານຄວາມໝັ້ນຄົງ.

ອ້າງອີງຂໍ້ມູນຈາກ : AA, The Guardian ແລະ Ready.gov.

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ຂ່າວຕ່າງປະເທດ · 16:00 ໂມງ · ອ່ານ 14 ຄັ້ງ

ອີລອນ ມັສກ໌ ຍອມຮັບພ່າຍແພ້ ຫຼັງທຸ່ມ 445 ລ້ານໂດລາ ຊ່ວຍຣີພັບລີກັນ ແຕ່ເສຍໃຫ້ເດໂມແຄຣັດ



ອີລອນ ມັສກ໌ ມະຫາເສດຖີເຈົ້າຂອງ Tesla ແລະ SpaceX ອອກມາເຄື່ອນໄຫວເປັນຄັ້ງທຳອິດ ໂດຍຍອມຮັບຄວາມພ່າຍແພ້ຜ່ານຂໍ້ຄວາມເຊີງປະຊົດປະຊັນ ຫຼັງທຸ່ມເງິນກວ່າ 445 ລ້ານໂດລາສະຫະລັດ ເພື່ອສະໜັບສະໜຸນພັກຣີພັບລີກັນ ໃນການເລືອກຕັ້ງກາງສະໄໝປີ 2026 ແຕ່ບໍ່ສາມາດຊ່ວຍໃຫ້ພັກຄອງສຽງຂ້າງຫຼາຍໃນສະພາຄອງເກຣສໄດ້ ຂະນະທີ່ພັກເດໂມແຄຣັດຄວ້າໄຊຊະນະທັງໃນສະພາສູງ ແລະສະພາຜູ້ແທນລາຊະດອນ.

ມັສກ໌ໂພສຂໍ້ຄວາມຜ່ານແພລດຟອມ X ໂດຍລະບຸວ່າ “ສູນຂໍ້ມູນໃນອະວະກາດເບິ່ງໜ້າສົມໃຈຂຶ້ນມາທັນທີ” ແລະອີກຂໍ້ຄວາມໜຶ່ງວ່າ “ເບິ່ງຄືວ່າເລເຊີຈາກອະວະກາດທີ່ຂ້ອຍໃຊ້ແຊກແຊງການເລືອກຕັ້ງ ຈະບໍ່ໄດ້ຜົນໃນຄັ້ງນີ້” ເຊິ່ງເປັນການກ່າວເຖິງຄວາມພະຍາຍາມໃຊ້ເງິນສະໜັບສະໜຸນຜູ້ສະໝັກ ແລະກຸ່ມການເມືອງຂອງພັກຣີພັບລີກັນ ເພື່ອຮັກສາອຳນາດໃນສະພາຄອງເກຣສ ແຕ່ສຸດທ້າຍກໍບໍ່ປະສົບຜົນສຳເລັດ

ຄວາມເຄື່ອນໄຫວດັ່ງກ່າວເກີດຂຶ້ນບໍ່ຮອດ 1 ຊົ່ວໂມງ ຫຼັງຈາກ ເຈມສ໌ ທາລາຣິໂກ ວ່າທີສະມາຊິກສະພາສູງຈາກພັກເດໂມແຄຣັດ ລັດເທັກຊັດ ຂຶ້ນເວທີໃນເມືອງອອສຕິນ ເພື່ອສະຫຼອງໄຊຊະນະ ພ້ອມກ່າວວິຈານມັສກ໌ ແລະປະທານາທິບໍດີໂດນັລ ທຣຳ ໂດຍລະບຸວ່າ ຕົນເອງ ແລະທີມຫາສຽງຕ້ອງປະເຊີນກັບຄູ່ແຂ່ງທີ່ມີເງິນສະໜັບສະໜຸນຫຼາຍກວ່າ 300 ລ້ານໂດລາ ເຊິ່ງຖືເປັນຈຳນວນສູງທີ່ສຸດໃນປະຫວັດສາດການຫາສຽງເລືອກຕັ້ງສະມາຊິກສະພາສູງສະຫະລັດ ລວມທັງຕ້ອງຮັບມືກັບໂຄສະນາໂຈມຕີ, ການໃສ່ຮ້າຍ, ບັນຊີປອມຈາກຕ່າງປະເທດ ແລະຮູບພາບ ຫຼືວິດີໂອປອມທີ່ສ້າງຂຶ້ນດ້ວຍປັນຍາປະດິດ ຫຼື AI

ທາລາຣິໂກກ່າວວ່າ ເຖິງແມ່ນປະຊາຊົນຈະມີຄວາມຄິດເຫັນແຕກຕ່າງກັນ ແຕ່ທຸກຄົນຕ່າງກໍຕ້ອງການສິ່ງດຽວກັນ ຂະນະທີ່ມະຫາເສດຖີຜູ້ຄວບຄຸມອັລກໍຣິທຶມຂອງສື່ສັງຄົມອອນລາຍ, ເຄືອຂ່າຍໂທລະພາບ ແລະນັກການເມືອງທີ່ປາກົດຢູ່ໜ້າຈໍ ກັບພະຍາຍາມເຮັດໃຫ້ປະຊາຊົນແຕກແຍກ ແລະຫັນມາຕໍ່ສູ້ກັນເອງ. ພ້ອມຢ້ຳວ່າ ຄວາມຂັດແຍ່ງທີ່ແທ້ຈິງຂອງປະເທດ ບໍ່ແມ່ນການຕໍ່ສູ້ລະຫວ່າງຝ່າຍຊ້າຍກັບຝ່າຍຂວາ ແຕ່ແມ່ນການຕໍ່ສູ້ລະຫວ່າງຄົນຊັ້ນນຳກັບປະຊາຊົນສ່ວນໃຫຍ່ຂອງປະເທດ ໂດຍຄວາມສາມັກຄີຂອງປະຊາຊົນຖືເປັນໄພຄຸກຄາມຕໍ່ຄວາມຮັ່ງມີ ແລະອຳນາດຂອງກຸ່ມຄົນຊັ້ນນຳ

ລາວຍັງກ່າວວ່າ ຜູ້ມີອຳນາດພະຍາຍາມແບ່ງແຍກປະຊາຊົນຕາມພັກການເມືອງ, ເຊື້ອຊາດ, ເພດ, ສາສະໜາ ແລະວັດທະນະທຳ ເພື່ອບໍ່ໃຫ້ປະຊາຊົນຮັບຮູ້ວ່າຕົນເອງກຳລັງຖືກເອົາປຽບ ພ້ອມປະກາດວ່າ ໄຊຊະນະໃນຄັ້ງນີ້ເປັນຂໍ້ຄວາມທີ່ຊັດເຈນວ່າ ປະຊາຊົນຈະບໍ່ຍອມໃຫ້ໃຜມາຄອບງຳ

ເຖິງແມ່ນທາລາຣິໂກຈະບໍ່ໄດ້ເອີ່ຍຊື່ ທຣຳ ໂດຍກົງ ແຕ່ລາວໄດ້ວິຈານວັດທະນະທຳທາງການເມືອງໃນຊ່ວງ 10 ປີຜ່ານມາ ທີ່ເຕັມໄປດ້ວຍການໃຊ້ຄວາມຂັດແຍ່ງເປັນເຄື່ອງມື, ການຍຸແຍ່ ແລະເຍາะเย้ยฝ่ายกิจ้าม ตะหูอดจินการเมืองที่ป฽บเฒือนมอยป้ำอาชีบ พ้อมละบุว่า ปะชาชินจากทุกแนวคิดทางการเมืองกำลังต้องการการเมืองรูปแบบใหม่ ที่ตั้งอยู่เหนือความรัก ແລະ ความเข้าใจ

ການแข่งขันชิงตำแหน่งสะมาชิกสะพาสูงในລัดเท้ากซัดถั้งนี้ ถือเป็นการเลือกตั้งที่ใช้จ่ายสูงที่สุดในประวัติศาสตร์สหรัฐ โดยมีการใช้จ่ายสำหรับโฆษณาลวมกันหลายกว่า 500 ล้านโดลา ตามข้อมูลติดตามการใช้จ่ายด้านโฆษณา. ການแข่งขันเป็นการชิงไชยะหว่าง เดโม แพ้กสตัน ไอยะการสูงสุดลัดเท้กซัดจากพักธิพับลิกัน กับ เจมส์ ทาลาธิโก ผู้สะหมัคจากพักเดโมแถธัด

กุ่มการเมืองพายนอกที่สะหนับสะหนุนแพ้กสตัน ทุ่มเงินประมาน 239 ล้านโดลา หลายกว่าเงินประมาน 45 ล้านโดลาที่กุ่มใหย่ที่สุดซึ่งสะหนับสะหนุนพักเดโมแถธัดใช้จ่ายหลายกว่า 5 เท่า. โดยกุ่ม Texas PAC ซึ่งเป็น Super PAC ของพักธิพับลิกัน ใช้เงินไปเกือบ 149 ล้านโดลา. กุ่มนี้ถูกจัดตั้งขึ้นโดย Senate Leadership Fund ซึ่งเป็น Super PAC หลักที่สะหนับสะหนุนผู้สะหมัคสะมาชิกสะพาสูงของพักธิพับลิกัน

เอกะสานด้านการเงินการเลือกตั้งของลัดถะบานกางละบุว่า มัสก์ผู้พักอาไสยู่ลัดเท้กซัด ແລะได้ย้ายสำนักงานใหย่ของทุละกิดหลายแห่ง ลวมทั้ง SpaceX, Tesla ແລะ X มายังลัดนี้ ได้บริจาคเงินให้ Senate Leadership Fund จำนวน 158 ล้านโดลา ก่อนที่กุ่มดังกล่าวจะโอนเงินจำนวนใกล้เคียงกันไปสะหนับสะหนุน Texas PAC

ເงินสะหนับสะหนุนจำนวนมะหาสานจากฝ่ายธิพับลิกันไหลเข้าสู่การแข่งขันในช่วงท้ายของการหาสียง โดย Super PAC MAGA Inc. ของทรัมป์ เริ่มใช้เงินก้อนใหย่ตั้งแต่ต้นเดือนกันยา. แดน เอเบิธาด นักทุละกิดน้ำมัน ແລะผู้บริจาคเงินให้พักธิพับลิกัน กล่าวว่า เงินสะหนับสะหนุนจากกุ่มผู้มีอำนาดเข้ามาในจังหวะที่เหมาะสมพอดีสำลับแพ้กสตัน

แนวใดกำตาม ทาลาธิโกสามาด ชิดเชียความเสียป฽บด้านเงินสะหนับสะหนุนจากกุ่มพายนอกได้ด้วยการละดมทุนจากประชาชินทั่วไป. ทีมหาสียงของลาวละบุว่า ในละหว่างเดือนกันยา สามาดละดมทุนได้ 64 ล้านโดลา หลายกว่าฝ่ายแพ้กสตันกว่า 3 เท่า ແລะเงินบริจาค 97% มาจากผู้บริจาคที่ให้เงินต่ำกว่า 100 โดลา

ข้อมูลจาก AdImpact ละบุว่า ทาลาธิโกใช้เงินซื้อโฆสะนาไปแล้ว 61 ล้านโดลา จินเถิงเดือนกันยา ขะนะที่ Lone Star Rising PAC ซึ่งเป็นกุ่มสะหนับสะหนุนพักเดโมแถธัดที่ใช้เงินหลายที่สุด ใช้จ่ายไป 19.3 ล้านโดลา

ก่อนการเลือกตั้ง ทาลาธิโกมีคะแนนนิยมนำแพ้กสตันเล้กน้อยย่างต่เนื่อง แต่คะแนนยังยู่ในขอบเขตความคาดเถื่อนทางสะถิติ เธ้ดให้การแข่งขันถั้งนี้เป็นการเลือกตั้งละดับลัดที่สูสีที่สุดของเท้กซัด นับตั้งแต่ปี 1994 ตามคำกล่าวของผู้ช่วยอานด้านการเมืองของลัด

เงินจำนวนมะหาสานถูกนำไปใช้กับโฆสะนาโจมตี โดยพะยายามนำสะเหนอว่า แนวคิดของทาลาธิโกบ่สอดถ่องกับค่านิยมของผู้มีสิดออกสียงในลัดเท้กซัด โดยสะเพาะปะเด็นความขัดแย่งทางอัดทะนะทำ ແລะสิดของถิมข้ามเพด. แนวใดกำตาม อิงกอบกอดสอบข้อเท็ดจิงอีดสะหละละบุว่า โฆสะนาหลายชิ้นบิดเบือนจุดยืนของทาลาธิโก ขะนะที่ผู้ช่วยอานมองว่า เป้าหมายของโฆสะนาเหล่านี้แม่นการกะตุ้นความรู้สึกต่ต้านในกุ่มผู้มีสิดออกสียงฝ่ายธิพับลิกัน เพื่อเพิ่มจำนวนผู้ออกมาใช้สิด

โฆสะนาของ Texas PAC ละบุว่า ทาลาธิโกสะหนับสะหนุนถิมข้าม

ต่ໜ້າ 13

ອີລອນ ມັສກ໌ ຍອມຮັບພ່າຍແພ້ ຫຼັງທຸ່ມ 445 ລ້ານໂດລາ ຊ່ວຍ... (ຕໍ່ຈາກໜ້າ 12)

ເພດຫຼາຍກວ່າປະຊາຊົນທົ່ວໄປ ແລະ ກ່າວຫາວ່າລາວສະໜັບສະໜຸນການຜ່າຕັດປ່ຽນເພດໃຫ້ແກ່ຜູ້ເຍົາໄວ ໂດຍໃຊ້ເງິນພາສີຂອງປະຊາຊົນ. ແຕ່ເວັບໄຊກວດສອບຂໍ້ເທັດຈິງ PolitiFact ຕັດສິນວ່າຂໍ້ກ່າວຫາດັ່ງກ່າວເປັນເທັດ ໂດຍຊີ້ວ່າ ເຖິງແມ່ນທາລາຮີໂກຈະຄັດຄ້ານກົດໝາຍຫ້າມການດູແລຮັກສາທີ່ກ່ຽວຂ້ອງກັບການປ່ຽນຜ່ານທາງເພດສຳລັບຜູ້ເຍົາໄວໃນປີ 2023 ແຕ່ລາວເຄີຍລະບຸຢ່າງຊັດເຈນວ່າຕົນເອງຄັດຄ້ານການຜ່າຕັດປ່ຽນເພດໃນເດັກ

ໃນລະດັບປະເທດ ກຸ່ມການເມືອງຂອງພັກຣີພັບລີກັນໃຊ້ເງິນຫຼາຍກວ່າ 100 ລ້ານໂດລາ ນັບຕັ້ງແຕ່ວັນທີ 1 ສິງຫາ ເພື່ອເຜີຍແຜ່ໂຄສະນາຫຼາຍກວ່າ 200 ຊິ້ນ ທີ່ກ່າວຫາວ່າພັກເດໂມແຄຣັດສະໜັບສະໜຸນການຜ່າຕັດປ່ຽນເພດໃຫ້ແກ່ເດັກ ຕາມການວິເຄາະຂໍ້ມູນຂອງ AdImpact ໂດຍ FactCheck.org

ໂຄສະນາຊິ້ນໜຶ່ງຂອງທີມແພັກສຕັນໃຊ້ຮູບພາບທາລາຮີໂກທີ່ສ້າງດ້ວຍ AI ໃຫ້ລາວກຳລັງອ່ານຂໍ້ຄວາມຈາກຄຳພີໄບເບິນສະບັບສິມມຸດທີ່ມີຊື່ວ່າ “King James (Talarico) Bible” ໂດຍນຳເອົາຄຳເວົ້າບາງສ່ວນຂອງລາວໃນອະດີດມາລວມກັນ ລວມທັງຂໍ້ຄວາມທີ່ກ່າວເຖິງພະເຈົ້າວ່າບໍ່ມີເພດທີ່ກຳນົດຕາຍຕົວ. ແນວໃດກໍຕາມ FactCheck.org ລະບຸວ່າ ໂຄສະນາດັ່ງກ່າວຂາດບໍລິບົດສຳຄັນທີ່ຈຳເປັນຕໍ່ການເຂົ້າໃຈຄຳເວົ້າຂອງລາວ

ທາລາຮີໂກຕອບໂຕ້ດ້ວຍການເອີ້ນແພັກສຕັນວ່າເປັນນັກການເມືອງທີ່ສໍ້ໂກງທີ່ສຸດໃນລັດເທັກຊັດ. ໂດຍແພັກສຕັນເຄີຍຖືກສະພາຜູ້ແທນລາຊະດອນຂອງລັດເຊັ່ງໃນເວລານັ້ນພັກຣີພັບລີກັນຄອງສຽງຂ້າງຫຼາຍ ມີມະຕິຖອນຖອນອອກຈາກຕຳແໜ່ງໃນປີ 2023 ຈາກຂໍ້ກ່າວຫາວ່າໃຊ້ອຳນາດໃນຕຳແໜ່ງໂດຍມິຊອບ ແຕ່ຕໍ່ມາວຸດທິສະພາຂອງລັດໄດ້ມີມະຕິຍົກຟ້ອງ. ສ່ວນຂໍ້ຫາສໍ້ໂກງຫຼັກຊັບອີກຄະດີໜຶ່ງ ເຊິ່ງມີມາຕັ້ງແຕ່ປີ 2015 ຖືກຍົກເລີກໃນປີ 2024 ພາຍໃຕ້ຂໍ້ຕົກລົງທີ່ກຳນົດໃຫ້ລາວເຮັດວຽກບໍລິການສັງຄົມ, ເຂົ້າຮັບການອົບຮົມດ້ານຈັນຍາບັນ ແລະ ຊົດໃຊ້ຄ່າເສຍຫາຍ. ທັງນີ້ ແພັກສຕັນປະຕິເສດການກະທຳຜິດທຸກຂໍ້ກ່າວຫາ

ຂໍ້ມູນການບໍລິຈາກທີ່ເປີດເຜີຍຕໍ່ສາທາລະນະລະບຸວ່າ ມັສກ໌ໄດ້ບໍລິຈາກເງິນສະໜັບສະໜຸນການເລືອກຕັ້ງໄປແລ້ວ 445.6 ລ້ານໂດລາ ຈົນເຖິງວັນທີ 14 ຕຸລາ ເຊິ່ງເປັນວັນທີລ່າສຸດທີ່ມີຂໍ້ມູນການບໍລິຈາກ. ຕົວເລກດັ່ງກ່າວລວມເຖິງເງິນຈາກອົງກອນບໍ່ແສວງຫາຜົນກຳໄລ United States of America Inc. ທີ່ຢູ່ພາຍໃຕ້ການຄວບຄຸມຂອງລາວອີກດ້ວຍ

ແນວໃດກໍຕາມ ຍອດການໃຊ້ຈ່າຍຕົວຈິງມີແນວໂນ້ມສູງກວ່ານີ້ ເນື່ອງຈາກຕົວເລກດັ່ງກ່າວຍັງບໍ່ລວມເງິນບໍລິຈາກອີກຫຼາຍສິບລ້ານໂດລາ ທີ່ມອບໃຫ້ຫຼັງວັນທີ 14 ຕຸລາ ຫຼືບໍລິຈາກຜ່ານອົງກອນທີ່ບໍ່ໄດ້ຍື່ນລາຍງານຕໍ່ຄະນະກຳມະການການເລືອກຕັ້ງກາງຂອງສະຫະລັດ. ຂະນະທີ່ການປະເມີນຈາກແຫຼ່ງຂໍ້ມູນອື່ນລະບຸວ່າ ມັສກ໌ໃຊ້ເງິນໄປແລ້ວ 474 ລ້ານໂດລາ ແລະຖ້າຫາກຕົວເລກນີ້ຖືກຕ້ອງ ຈະຖືເປັນຍອດເງິນທີ່ຜູ້ບໍລິຈາກລາຍດຽວໃຊ້ສະໜັບສະໜຸນການເລືອກຕັ້ງຫຼາຍທີ່ສຸດໃນປະຫວັດສາດການເລືອກຕັ້ງສະຫະລັດໜຶ່ງຮອບ

ກ່ອນໜ້ານີ້ ມັສກ໌ເຄີຍໃຫ້ຄຳໝັ້ນວ່າຈະຫຼຸດການໃຊ້ຈ່າຍດ້ານການເມືອງລົງ ໂດຍກ່າວເມື່ອເດືອນພຶດສະພາ 2025 ວ່າລາວຈະໃຊ້ເງິນສະໜັບສະໜຸນກິດຈະກຳທາງການເມືອງໃຫ້ໜ້ອຍລົງໃນອະນາຄົດ ຫຼັງຈາກຕ້ອງສູນເສຍເງິນຈຳນວນຫຼາຍຈາກການເລືອກຕັ້ງຜູ້ພິພາກສາສານສູງສຸດຂອງລັດວິສຄອນຊິນ. ແນວໃດກໍຕາມ ໃນເວລານັ້ນລາວຍັງກ່າວວ່າ ຖ້າເຫັນວ່າມີເຫດຜົນທີ່ເໝາະສົມ ກໍພ້ອມກັບມາໃຊ້ເງິນສະໜັບສະໜຸນການເມືองອີກຄັ້ງ

ຈົນມາຮອດເດືອນຕຸລາ 2026 ຍອດເງິນທີ່ມັສກ໌ໃຊ້ສະໜັບສະໜຸນການເລືອກຕັ້ງ ກໍສູງກວ່າຈຳນວນເງິນທີ່ລາວເຄີຍໃຊ້ໃນການເລືອກຕັ້ງປີ 2024 ແລ້ວ

ທີ່ມາ: The Independent

◆ ຂ່າວຕ່າງປະເທດ · 13:12 ໂມງ · ອ່ານ 13 ຄັ້ງ

ປິດສາກການໄລ่ລ່າ 9 ວັນ ຂ້າມ 3 ລັດ! ເຈົ້າໜ້າທີ່ສະຫະລັດຈັບກຸມນັກໂທດຄາດຕະກຳແຫກຄຸກຈາກລັດເທນເນສຊີໄດ້ແລ້ວ ຫຼັງຜູ້ກ່ຽວຂັບລົດທີ່ລັກມາໄປຕິດຂີ້ຕົມ.



ເຈົ້າໜ້າທີ່ສະຫະລັດລະດົມກຳລັງຮ່ວມກັນຈັບກຸມ “ເຈຄອຍ ອັນເລນ ມໍລີ” ນັກໂທດຄະດີຂ້າຄາດຕະກຳເພື່ອນຮ່ວມງານ ແລະທຳລາຍສິບ ທີ່ຫຼົບໜີອອກຈາກຄຸກໃນລັດເທນເນສຊີໄດ້ສຳເລັດ ຫຼັງຈາກເປີດປະຕິບັດການໄລ່ລ່າຂ້າມ 3 ລັດ ເປັນເວລາດົນກວ່າ 9 ວັນ.

ການຫຼົບໜີຂອງລາວສິ້ນສຸດລົງ ຫຼັງຈາກຂັບລົດກະບະທີ່ລັກມາຈົນອອກນອກເສັ້ນທາງ ແລະຕິດຂີ້ຕົມຢູ່ໃນລັດມິສ

ຕໍ່ໜ້າ 14

ปิดสากกามไล่ล่า 9 อัน ข้าม 3 ลัด! เจ้าหน้าที่สะหะลัดจับ... (ต้จากหน้า 13)

ຊູຣີ. ເມື່ອກວດຄົ້ນລົດ ເຈົ້າໜ້າທີ່ພົບປືນ 3 ກະບອກ ເຊິ່ງມີລາຍງານວ່າເປັນອາວຸດທີ່ຖືກລັກມາ ໂດຍກຽມແຈ້ງຂໍ້ຫາເພີ່ມເຕີມ.

ເຈົ້າໜ້າທີ່ສະຫະລັດສາມາດຈັບກຸມ ເຈຄອບ ອັນເລນ ມໍລີ ອາຍຸ 28 ປີ ນັກໂທດຄະດີຄາດຕະກຳທີ່ຫຼົບໜີອອກຈາກຄຸກໃນລັດເທນເນສຊີໄດ້ແລ້ວ ຫຼັງຈາກຕິດຕາມໄລ່ລ່າເປັນເວລາ 9 ວັນ ຄອບຄຸມພື້ນທີ່ 3 ລັດ ໂດຍການຫຼົບໜີຄັ້ງນີ້ສິ້ນສຸດລົງເມື່ອລາວຂັບລົດອອກນອກເສັ້ນທາງ ແລະຕິດຂີ້ຕົມຢູ່ໃນລັດມິສຊູຣີ.

ສຳນັກງານສືບສວນລັດເທນເນສຊີ (TBI) ເປີດເຜີຍວ່າ ມໍລີຖືກຈັບກຸມໃນລະຫວ່າງປະຕິບັດການຮ່ວມຂອງເຈົ້າໜ້າທີ່ທ້ອງຖິ່ນ ໜ່ວຍງານລະດັບລັດ ແລະໜ່ວຍງານລັດຖະບານກາງ ຫຼັງໄດ້ຮັບເບາะແສວ່າລາວກຳລັງລີ້ຊ່ອນຢູ່ໃນລັດອິລິນອຍ ແລະໄດ້ລັກລົດກະບะອີກຄັນຈາກຟາມແຫ່ງໜຶ່ງ.

ເຈົ້າໜ້າທີ່ໄດ້ຕິດຕາມປ້າຍທะບຽນລົດຜ່ານລะບົບອ່ານປ້າຍທะບຽນອັດຕะໂນມັດ ແລະກ້ອງວົງຈອນປິດ FLOCK ກ່ອນຈะພົບລົດຄັນດັ່ງກ່າວແລ່ນຢູ່ເທິງທາງຫຼວງໝາຍເລກ 291 ໃນລັດມິສຊູຣີ.

ຕຳຫຼວດທາງຫຼວງລັດມິສຊູຣີໄດ້ເຂົ້າຈັບກຸມມໍລີໃນເຂດແຄໂຣລ ເມື່ອເວລາປะມານ 11 ໂມງ 34 ນาທี ของวัน ອ້າງຄາມຕາມເວລາທ້ອງຖິ່ນ ໂດຍລาอบ่ได้ขัดขืนการจับกุม. พ้อมกับนี้เจ้าหน้าที่ยังพบปืน 3 กะบอกอยู่ในลิด เชื่อมีลายงานว่าเป็นปืนที่ถูกลักมา.

ມໍລີຫຼົບໜີອອກຈາກຄຸກຄວາມປອດໄພສູງ North West Correctional Complex ໃນເມືອງ Tiptonville ລັດເທນເນສຊີ ໃນຄືນວັນທີ 25 ຕຸລา ขะนะกำลังรับโทดจำคุกตะหลอดชีวิด จากคะดีคาดตะกำเพื่อนร่วมงาน ชื่ Cody Burchfield ในปี 2022.

ພาบจากก้องวิงจอนปิดเผียให้เห็นว่า ມໍລີสวมชุดนักโทด ແລะปีนข้ามธั้วธักสาถวามปอดไพ ก่อนจะไปลี้ซ่อนอยู่บ้ลิเวนด้านหลังห้องถือของคุก ແລะลักลิดกะบะ Ford จากฟาม ให้กลงในช่องเช้ำมิดของวันที่ 26 ตุลา.

ຫຼັງจากหลีบหนี ลาอได้ขับลิดข้ามลัดไปยังเมือง Marion ในลัดอิลินอย ก่อนจะปะถิ้มลิดคันทำอิด ແລะหายตือไปเป็นเวลา 8 วัน เธ็ดให้เจ้าหน้าที่ต้องออกปะกาดเตือนปะชาชิน พ้อมทั้งเพิ่มชื่ลาอเข้าในบันชิลายชื่ผู้ต้องกานตือหลายที่สุด ແລะปะกาดมอบเงินลางวันสำลับผู้แจ้งเบาะแส.

ต่มา เจ้าหน้าที่ได้ธับเบาะแสว่า มໍລີลี้ซ่อนตือยู่ในกะต่อมพายในเขตพักล่าสัดใก้กับเมือง Marion ก่อนจะลักลิดกะบะอีกคันหนึ่งไปใช้. โดยลาอได้ข฽งข้อถามด้วยลายมือเพื่อขอโทดเจ้าของลิด พ้อมฝากข้อถามบอกแม่ว่าตินธักแม่ เชื่องข้อถามดั่งก่าวช่วยให้เจ้าหน้าที่เชื่อมโยงเบาะแสจินสามาดติดตามหาตือลาอได้.

ມໍລີถูกตัดสินว่ามีถวามผิดฐานถาดตะกำ จากกำละนิกานเสยชีวิดของ Cody Burchfield เพื่อนร่วมงานในปี 2022 หลังจากพบสิบของ Burchfield อยู่ในก่องโลหะใต้เธือนของมໍลี ทายสับปะดาหลังจากถอบถือแจ้งว่าลาอหายตือไป.

ผินกานชันสูดละบุว่า Burchfield เสยชีวิดจากกานถูกยิงเข้าที่ท้ายทอยด้านหลัง ແລะปอกกะสุนที่พบยังกังกับอาวุดปืนที่พบอยู่ในเธือนของมໍลีอีกด้วย.

ນอกจากถะดีถาดตะกำแล้ว ມໍลียังถูกตัดสินว่ามีถวามผิดในข้อหาบุกลุกเถหะสะถานโดยมิเหดธ้ายแธง ทำลายธับสิน ปอมแปง หรือทำลายหลักถาน ແລะหลีบหนีกานจับกุม. ลาอถูกพิพากสาให้จำถุกตะหลอดชีวิดในเดือนมิถุนา 2025 ແລะถำธ้องขอให้พิจาละนาละดีใหม่กำถูกปะติเสดในเดือนพืดสะพาที่ผ่านมา.

กานหลีบหนีถั้งนี้ยังส้างถวามกังวินให้แก่ถอบถือของผู้เสยชีวิดโดยยาดของ Burchfield ละบุว่ากานหลีบหนีของผู้ก่อเหดได้ปุกถวามเจ็บปวด ແລะบาดแผพางจิดใจที่เถียเกิดขึ้นให้กับมาอีกถั้ง.

ເจ้าหน้าที่ละบุว่า ມໍลีจะถูกดำเนินถะดีเพิ่มเติมในลัดเทนเนสซี จากข้อหาหลีบหนีออกจากคุก ทำลายธับสิน ແລะลักธับ ะนะที่ลาอาดจะปะเชิญกับข้อหาเพิ่มเติมในลัดอิลินอย ແລะลัดมิสซูริอีกด้วย.

กานหลีบหนีของมໍลีเกิดขึ้นในช่องที่กิมลาชะทันทันของลัดเทนเนสซีกำลังถูกกวดสอบบันหาด้านถวามปอดไพ โดยลาอเป็นนักโทดถืนที่ 2 ที่หลีบหนีจากกานถอบคุมของหน่วยงานในเดือนตุลา หลังจากก่อนหน้านี้ Gregory Redden อายุ 63 ปี ได้หลีบหนีออกจากโธงหมำในเมือง Nashville เมื่อวันที่ 21 ตุลา ก่อนจะถูกจับกุมได้ในพายหลัง.

นอกจากนี้ คุก North West Correctional Complex เชื่องสามาดธองธับนักโทดได้เถิง 1,776 ถืน ยังเถียเกิดเหดธุมแธงหลายถั้งในช่องหลายปีผ่านมา โดยในเดือนกันยะกิด ถะนะลูกขุนใหย่ได้ออกถำฟ้องหลายสิบถะดี ก่องกับกานทำธ้าย เจ้าหน้าที่ ແລะกานถาดตะกำนักโทด 5 ถืน.

ที่มา: CNN / BBC

โถสะบา

ลົງโถสะบา ใน ມะหาสาน ลายอัน

หังสือพิม PDF ปะจำอัน · จองเป็นลายอัน, ลายอาทิด หรือ ลายเดือน · ทิมงานออกแบบให้ฟรี


WhatsApp 020 5888 6182

ลาถาน้ำมัน, เงิน, ถำ, หวย ແລะ อากาด — สืดทุกมื้

เบิ่งถือเลกล่าสุด ที่ mahaxan.com/today · หน้า 20 ในสะบับนี้

ຂ່າວຕ່າງປະເທດ · 11:06 ໂມງ · ອ່ານ 11 ຄັ້ງ

ຕມ.ໜອງຄາຍ ຈັບຊາຍຊາວລາວ ຫຼັງພົບປະຫວັດນຳເງິນໂດລາຈາກລາວໄປແລກເປັນເງິນໄທ 38 ລ້ານບາດ



ຕຳຫຼວດກວດຄົນເຂົ້າເມືອງຈັງຫວັດໜອງຄາຍ (ຕມ.ໜອງຄາຍ) ຈັບກຸ່ມຊາຍຊາວ ສປປ ລາວ ຕາມໝາຍຈັບຂອງສານຈັງຫວັດໜອງຄາຍ ໃນຂໍ້ຫາຟອກເງິນ. ຈາກການກວດສອບພົບວ່າ ໃນປີ 2023 ຜູ້ຖືກຫາໄດ້ນຳເງິນໂດລາສະຫະລັດຈາກ ສປປ ລາວ ເຂົ້າມາແລກເປັນເງິນບາດໄທ ມູນຄ່າ 38 ລ້ານບາດ ແຕ່ຖືກເຈົ້າໜ້າທີ່ພາສີໜອງຄາຍກວດພົບ ແລະຍຶດໄວ້ເພື່ອກວດສອບ. ຕໍ່ມາ ສຳນັກງານປ້ອງກັນແລະປາບປາມການຟອກເງິນ (ປປງ.) ໄດ້ກວດສອບແລ້ວເຫັນວ່າ ການກະທຳດັ່ງກ່າວອາດເຂົ້າຂ່າຍຄວາມຜິດຖານຟອກເງິນ ຈຶ່ງມີການອອກໝາຍຈັບ.

ວັນທີ 3 ພະຈິກ 2026 ພັນຕຳຫຼວດເອກ ນິບພະດົນ ຮັກຊາດ ຜູ້ກຳກັບການຕຳຫຼວດກວດຄົນເຂົ້າເມືອງຈັງຫວັດໜອງຄາຍ, ພັນຕຳຫຼວດໂທ ທິຍາພັດ ຣັງສີພຣາມະນະກຸນ ຮອງຜູ້ກຳກັບການ, ພັນຕຳຫຼວດໂທ ອະພິຊາດ ຄົນທາ ສາລະອັດ ພ້ອມດ້ວຍເຈົ້າໜ້າທີ່ ຕມ.ໜອງຄາຍ ພາຍໃຕ້ນະໂຍບາຍຂອງ ພົນຕຳຫຼວດເອກ ສຳລານ ນອນມາ ຜູ້ບັນຊາການຕຳຫຼວດແຫ່ງຊາດ ໄທ ແລະການອຳນວຍການຂອງບັນດາຜູ້ບັນຊາການລະດັບສູງຂອງສຳນັກງານຕຳຫຼວດກວດຄົນເຂົ້າເມືອງ ໄດ້ຈັບກຸມ ທ້າວ ສົມຫວັງ ແກ້ວບຸນເຮືອງ (MR. SOMVANG KEOBOUNHEUANG) ອາຍຸ 39 ປີ ຢູ່ບ້ານດົງປ່າລານ ເມືອງສີສັດຕະນາດ ນະຄອນຫຼວງວຽງຈັນ ສປປ ລາວ ຕາມໝາຍຈັບສານຈັງຫວັດໜອງຄາຍ ເລກທີ ຈ.315/2569 ລົງວັນທີ 26 ຕຸລາ 2026 ໃນຂໍ້ຫາ “ສົມຄົບກັນໂດຍຕົກລົງໃຈຕັ້ງແຕ່ 2 ຄົນຂຶ້ນໄປ ເພື່ອກະທຳຄວາມຜິດຖານຟອກເງິນ ແລະມີການກະທຳຄວາມຜິດຖານຟອກເງິນເກີດຂຶ້ນຍ້ອນການສົມຄົບດັ່ງກ່າວ ພ້ອມທັງຮ່ວມກັນກະທຳຄວາມຜິດຖານຟອກເງິນ”.

ພັນຕຳຫຼວດໂທ ທິຍາພັດ ຣັງສີພຣາມະນະກຸນ ຮອງຜູ້ກຳກັບການ ຕມ.ໜອງຄາຍ ກ່າວວ່າ ຈາກການສອບສວນຜູ້ຖືກຫາ ຊາບວ່າຜູ້ກ່ຽວປະກອບອາຊີບເປີດຮ້ານຮັບແລກປ່ຽນເງິນຢູ່ນະຄອນວຽງຈັນ ສປປ ລາວ ໂດຍຮັບແລກທັງເງິນໂດລາສະຫະລັດ, ເງິນບາດໄທ ແລະເງິນສະກຸນອື່ນໆ. ເມື່ອຮັບແລກເງິນໂດລາສະຫະລັດໄດ້ຈຳນວນຫຼາຍແລ້ວ ຜູ້ກ່ຽວຈະລັກລອບນຳເງິນເຂົ້າມາແລກເປັນເງິນບາດໄທ ແລ້ວລັກລອບນຳກັບຂ້າມໄປຍັງ ສປປ ລາວ ໂດຍດຳເນີນການແບບນີ້ເປັນປະຈຳ.

ຕໍ່ມາ ປະມານປີ 2023 ຜູ້ກ່ຽວໄດ້ລັກລອບນຳເງິນໂດລາສະຫະລັດເຂົ້າມາແລກເປັນເງິນບາດໄທກັບທະນາຄານແຫ່ງໜຶ່ງໃນຈັງຫວັດອຸດອນທານີ ເຊິ່ງຜູ້ກ່ຽວຈື່ຊື່ທະນາຄານບໍ່ໄດ້ ເປັນຈຳນວນເງິນປະມານ 38 ລ້ານບາດ ກ່ອນຈະລັກລອບນຳເງິນຂ້າມກັບໄປຍັງ ສປປ ລາວ ແຕ່ຖືກເຈົ້າໜ້າທີ່ພາສີຈັງຫວັດໜອງຄາຍກວດພົບ ແລະຈັບກຸມ ກ່ອນຈະສົ່ງໃຫ້ພະນັກງານສອບສວນດຳເນີນຄະດີຕາມກົດໝາຍ.

ຜູ້ຖືກຫາໃຫ້ການວ່າ ມີຄົນແນະນຳໃຫ້ຕົນຍອມມອບເງິນຈຳນວນດັ່ງກ່າວໃຫ້ແກ່ລັດຖະບານໄທ ແລ້ວຕົນຈະບໍ່ຕ້ອງມີຄວາມຜິດ. ເນື່ອງຈາກຢ້ານວ່າຈະຖືກລົງໂທດ ຈຶ່ງຍອມມອບເງິນຂອງກາງຈຳນວນ 38 ລ້ານບາດໃຫ້ເຈົ້າໜ້າທີ່ພາສີ ເພື່ອນຳສົ່ງເປັນລາຍຮັບຂອງລັດ ຈຶ່ງໄດ້ຮັບການປ່ອຍຕົວ.

ຕໍ່ມາ ສຳນັກງານ ປປງ. ໄດ້ກວດສອບແລ້ວເຫັນວ່າ ການກະທຳດັ່ງກ່າວອາດເຂົ້າຂ່າຍຄວາມຜິດຖານສົມຄົບກັນ ໂດຍຕົກລົງໃຈຕັ້ງແຕ່ 2 ຄົນຂຶ້ນໄປ ເພື່ອກະທຳຄວາມຜິດຖານຟອກເງິນ ແລະມີການກະທຳຄວາມຜິດຖານຟອກເງິນ ເກີດຂຶ້ນຍ້ອນການສົມຄົບດັ່ງກ່າວ ລວມທັງຮ່ວມກັນກະທຳຄວາມຜິດຖານຟອກເງິນ. ຈຶ່ງໄດ້ຮ້ອງທຸກຕໍ່ພະນັກງານສອບສວນ ເພື່ອດຳເນີນຄະດີກັບຜູ້ຖືກຫາ ຈົນສານຈັງຫວັດໜອງຄາຍອອກໝາຍຈັບດັ່ງກ່າວ. ຜູ້ຖືກຫາລະບຸວ່າ ບໍ່ຮູ້ວ່າຕົນມີໝາຍຈັບ.

ພາຍຫຼັງການສອບສວນ ຊຸດເຈົ້າໜ້າທີ່ຈັບກຸມຈະນຳຕົວຜູ້ຖືກຫາສົ່ງໃຫ້ພະນັກງານສອບສວນ ສະຖານີຕຳຫຼວດພຸທອນໜອງຄາຍ ເພື່ອດຳເນີນຄະດີຕາມກົດໝາຍຕໍ່ໄປ.

ທີ່ ມ າ : nongkhainewsonline.

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວຕ່າງປະເທດ · 10:38 ໂມງ · ອ່ານ 9 ຄັ້ງ

ຄຳຊູ່ວ່າງລະເບີດປ່ວນນ່ານຟ້າເອີຣົບ! ເຮືອບິນຢ່າງໜ້ອຍ 7 ຖ້ຽວຖືກຊູ່ວ່າງລະເບີດ ສັ່ງປິດສະໜາມບິນຊົ່ວຄາວ ແຕ່ກວດບໍ່ພົບວັດຖຸລະເບີດ



ສຳນັກຂ່າວຕ່າງປະເທດລາຍງານເມື່ອວັນທີ 3 ພະຈິກ 2026 ວ່າ ມີຜູ້ບໍ່ປະສົງອອກນາມກໍ່ເຫດຊູ່ວ່າງລະເບີດເຮືອບິນໂດຍສານຈຳນວນ 7 ຖ້ຽວບິນທົ່ວເອີຣົບ ສິ່ງຜົນໃຫ້ເຈົ້າໜ້າທີ່ໃນຫຼາຍປະເທດຕ້ອງຍົກລະດັບການກວດກາຄວາມປອດໄພຢ່າງເຂັ້ມງວດ ແຕ່ສຸດທ້າຍບໍ່ພົບວັດຖຸລະເບີດແຕ່ຢ່າງໃດ.

ເຮືອບິນໂດຍສານຢ່າງໜ້ອຍ 7 ຖ້ຽວບິນ ແລະເຮືອສຳລານ 1 ລຳ ໃນເອີຣົບ ໄດ້ຮັບຄຳຊູ່ວ່າງລະເບີດໃນວັນອັງຄານ ສິ່ງຜົນໃຫ້ເກີດຄວາມປັ່ນປ່ວນຕາມສະໜາມບິນຕ່າງໆ ເຖິງແມ່ນວ່າຈະບໍ່ພົບວັດຖຸລະເບີດກໍຕາມ.

ໃນວັນອັງຄານ ມີເຮືອບິນຢ່າງໜ້ອຍ 2 ຖ້ຽວບິນທີ່ເດີນທາງໄປຍັງກຸງວໍຊໍ, 2 ຖ້ຽວບິນໄປຍັງກຸງໂຊເຟຍ, 2 ຖ້ຽວບິນໄປຍັງກຸງໂຣມ ແລະອີກ 1 ຖ້ຽວບິນໄປຍັງສະໜາມບິນເມືອງເມິເຊຍ ປະເທດສະເປນ ຖືກຊູ່ວ່າງລະເບີດ. ນອກຈາກນີ້ ຍັງມີອີກ 1 ຖ້ຽວບິນທີ່ເດີນທາງໄປຍັງກຸງໂຊເຟຍ ຖືກຊູ່ວ່າງລະເບີດມາກ່ອນໜ້ານີ້ 1 ມື້.

ເຫດການດັ່ງກ່າວເຮັດໃຫ້ສະໜາມບິນແຫ່ງໜຶ່ງໃນກຸງວໍຊໍຕ້ອງປິດໃຫ້ບໍລິການຊົ່ວຄາວ ຂະນະທີ່ກອງທັບອາກາດອິຕາລີໄດ້ສົ່ງເຮືອບິນຮົບບິນຄຸ້ມກັນເຮືອບິນຖ້ຽວໜຶ່ງທີ່ມຸ່ງໜ້າໄປຍັງກຸງໂຣມ. ຂະນະດຽວກັນ ເຮືອສຳລານລຳໜຶ່ງທີ່ມຸ່ງໜ້າໄປຍັງປະເທດອິສຣາແອນ ກໍຖືກກວດຄົ້ນຫາລະເບີດໃນປະເທດກຣີຊ.

ທ່ານ ຣິສ ໂຈນສ໌ ຜູ້ຈັດການຝ່າຍວິເຄາະຂໍ້ມູນ ຂອງບໍລິສັດ Osprey Flight Solutions ເຊິ່ງເປັນບໍລິສັດໃຫ້ຄຳປຶກສາດ້ານຄວາມສ່ຽງການບິນ ກ່າວວ່າ ການມີຄຳຊູ່ວ່າງລະເບີດທີ່ໄດ້ຮັບການຢືນຢັນເຖິງ 7 ກໍລະນີພາຍໃນມື້ດຽວ ແລະສິ່ງຜົນກະທົບຕໍ່ຖ້ຽວບິນຕ່າງໆ ຖືເປັນເຫດການທີ່ຜິດປົກກະຕິຢ່າງຫຼາຍ.

ທ່ານ ໂຈນສ໌ ກ່າວກັບ Reuters ວ່າ: “ການທີ່ບໍ່ມີການລະບຸເປົ້າໝາຍຢ່າງຊັດເຈນ ບໍ່ວ່າຈະເປັນປະເທດ ສາຍການບິນ ຫຼືເສັ້ນທາງບິນ ສະແດງໃຫ້ເຫັນວ່າ ເປົ້າໝາຍອາດແມ່ນການສ້າງຄວາມປັ່ນປ່ວນໃຫ້ແກ່ລະບົບການບິນໂດຍລວມ.”

ເຈົ້າໜ້າທີ່ໄດ້ປ່ຽນເສັ້ນທາງຖ້ຽວບິນຂອງສາຍການບິນ ລອດ ທີ່ເດີນທາງມາຈາກລອນດອນ ໂດຍເດີມມີກຳນົດລົງຈອດທີ່ສະໜາມບິນໂຊແປງ ໃນກຸງວໍຊໍ ໃຫ້ໄປລົງຈອດທີ່ສະໜາມບິນມອດລິນ ທີ່ຢູ່ໃກ້ຄຽງແທນ. ສະໜາມບິນມອດລິນໄດ້ປິດໃຫ້ບໍລິການຊົ່ວຄາວ ກ່ອນຈະກັບມາເປີດອີກຄັ້ງ ຫຼັງຈາກກວດຄົ້ນເຮືອບິນແລ້ວບໍ່ພົບວັດຖຸລະເບີດ.

ສ່ວນອີກຖ້ຽວບິນໜຶ່ງທີ່ມຸ່ງໜ້າໄປຍັງກຸງວໍຊໍ ຂອງສາຍການບິນ SAS ທີ່ເດີນທາງມາຈາກກຸງໂຄເປນເຮເກນ ສາມາດລົງຈອດທີ່ສະໜາມບິນໂຊແປງໄດ້ຕາມກຳນົດ. ທາງສະໜາມບິນໂຊແປງ ລະບຸວ່າ ບໍ່ພົບວັດຖຸລະເບີດ ແລະສະໜາມບິນຍັງຄົງເປີດໃຫ້ບໍລິການຕາມປົກກະຕິ.

ຖ້ຽວບິນ 2 ຖ້ຽວທີ່ມຸ່ງໜ້າໄປຍັງກຸງໂຊເຟຍຖືກຊູ່ວ່າງລະເບີດ

ກະຊວງຄົມມະນາຄົມຂອງບັນແກເຣຍ ລະບຸໃນຖະແຫຼງການທີ່ສົ່ງໃຫ້ Reuters ວ່າ ມີການຊູ່ວ່າງລະເບີດເຮືອບິນ 2 ຖ້ຽວບິນ ທີ່ເດີນທາງຈາກເມືອງມິລານ-ເບີກາໂມ ແລະເມືອງດັບລິນ ໄປຍັງກຸງໂຊເຟຍ.

ຖະແຫຼງການລະບຸວ່າ ທັງສອງຖ້ຽວບິນສາມາດລົງຈອດໄດ້ຢ່າງປອດໄພ ແລະຜົນການກວດຄົ້ນກໍບໍ່ພົບວັດຖຸລະເບີດ.

ຖ້ຽວບິນຈາກເບີກາໂມເປັນຂອງສາຍການບິນ ວິສແອ ແລະມີຜູ້ໂດຍສານ 176 ຄົນຢູ່ເທິງເຮືອບິນ. ສ່ວນຖ້ຽວບິນຈາກດັບລິນເປັນຂອງສາຍການບິນ ໄອອັນ ແອ ແລະມີຜູ້ໂດຍສານ 186 ຄົນ.

ກ່ອນໜ້ານີ້ ສຳນັກຂ່າວ BTA ຂອງບັນແກເຣຍເຄີຍອ້າງຄຳກ່າວຂອງເຈົ້າໜ້າທີ່ກະຊວງພາຍໃນວ່າ ມີຖ້ຽວບິນຈາກປະເທດອິສຣາແອນໄດ້ຮັບຜົນກະທົບເຊັ່ນກັນ. ແຕ່ຕໍ່ມາ ເຈົ້າໜ້າທີ່ໄດ້ອອກມາຊີ້ແຈງວ່າ ຂໍ້ມູນດັ່ງກ່າວບໍ່ເປັນຄວາມຈິງ.

ກ່ອນໜ້ານີ້ໜຶ່ງມື້ ເຮືອບິນຂອງສາຍການບິນ ວິສແອ ຖ້ຽວບິນຈາກລອນດອນ ໄປຍັງກຸງໂຊເຟຍ ກໍຖືກປ່ຽນເສັ້ນທາງໄປລົງຈອດທີ່ສະໜາມບິນບຸດາເປສ ປະເທດຮັງກາຣີ ຫຼັງຈາກໄດ້ຮັບຄຳຊູ່ວ່າງລະເບີດຕາມຄຳເປີດເຜີຍຂອງ ໂຣມຸລສ ຣຸຊິນ-ເຊນດີ ລັດຖະມົນຕີກະຊວງກະລາໂຫມ ຂອງຮັງກາຣີ ຜ່ານຂໍ້ຄວາມໃນເຟສບຸກ.

ເຈົ້າໜ້າທີ່ລະບຸວ່າ ລາຍງານການຊູ່ວ່າງລະເບີດດັ່ງກ່າວເປັນພຽງຂ່າວລວງ ແລະສະໜາມບິນໄດ້ກັບມາເປີດໃຫ້ບໍລິການຕາມປົກກະຕິ ຫຼັງຈາກເຈົ້າໜ້າທີ່ກວດຄົ້ນເຮືອບິນແລ້ວບໍ່ພົບວັດຖຸລະເບີດ. ຂະນະດຽວກັນ ສາຍການບິນ Ryanair ຍັງບໍ່ໄດ້ອອກມາໃຫ້ຄຳເຫັນໃນທັນທີ.

ສ່ວນເຮືອບິນອີກ 2 ຖ້ຽວຂອງສາຍການບິນ Ryanair ຖ້ຽວໜຶ່ງເດີນທາງມາຈາກເມືອງລິສບອນ ແລະອີກຖ້ຽວໜຶ່ງມາຈາກເມືອງດັບລິນ ຖືກກວດຄົ້ນທີ່ສະໜາມບິນຟີອູມິຊິໂນ ໃນກຸງໂຣມ ຫຼັງຈາກໄດ້ຮັບຄຳຊູ່ວ່າງລະເບີດ ຕາມການເປີດເຜີຍຂອງແຫຼ່ງຂ່າວຈາກ ADR ຜູ້ດຳເນີນງານສະໜາມບິນ.

ສຳລັບຖ້ຽວບິນຈາກດັບລິນ ມີເຮືອບິນຂັບໄລ່ຂອງກອງທັບອາກາດອິຕາລີບິນຄຸ້ມກັນຈົນກວ່າຈະລົງຈອດຢ່າງປອດໄພ.

ແຫຼ່ງຂ່າວລະບຸວ່າ ສັນຍານເຕືອນໄພໄດ້ຖືກຍົກເລີກ ແລະສະໜາມບິນຍັງຄົງເປີດໃຫ້ບໍລິການຕາມປົກກະຕິ ໂດຍບໍ່ສົ່ງຜົນກະທົບຕໍ່ຖ້ຽວບິນອື່ນໆ.

ຂະນະດຽວກັນ ທີ່ເກາະ Syros ປະເທດກຣີຊ ເຈົ້າໜ້າທີ່ໄດ້ນຳໝາດົມກົ່ນກວດຫາວັດຖຸລະເບີດ ແລະນັກດຳນ້ຳ ເຂົ້າກວດຄົ້ນເຮືອສຳລານ Crown Iris ທີ່ຕິດທຸງຊາດປານາມາ ຫຼັງຈາກມີບຸກຄົນບໍ່ຊາບຊື່ແຈ້ງວ່າ ມີວັດຖຸລະເບີດຕິດຢູ່ບໍລິເວນທ້ອງເຮືອ.

ຕໍ່ມາ ທ່ານ ຈໍຈີ ພິຟ ລັດຖະມົນຕີວ່າການກະຊວງຄົມມະນາຄົມຂອງບັນແກເຣຍ ໄດ້ເປີດເຜີຍວ່າ ມີການຊູ່ວ່າງລະເບີດເຮືອບິນ 2 ລຳ ທີ່ເດີນທາງມາຍັງກຸງໂຊເຟຍ ນະຄອນຫຼວງຂອງປະເທດ. ແນວໃດກໍຕາມ ເຮືອບິນທັງສອງລຳບໍ່ຈຳເປັນຕ້ອງປ່ຽນເສັ້ນທາງບິນ ແລະຜົນການກວດຄົ້ນກໍບໍ່ພົບລະເບີດແຕ່ຢ່າງໃດ.

ເຫດການນີ້ເກີດຂຶ້ນພຽງໜຶ່ງມື້ ຫຼັງຈາກເຮືອບິນຂອງສາຍການບິນ ວິສແອ ທີ່ອອກຈາກສະໜາມບິນລອນດອນ ລູຕັນ ຕ້ອງລົງຈອດສຸກເສີນທີ່ກຸງບຸດາເປສ ປະເທດຮັງກາຣີ ໂດຍມີເຮືອບິນຮົບບິນຄຸ້ມກັນ. ຂະນະນີ້ ເຈົ້າໜ້າທີ່ຈາກຫຼາຍປະເທດກຳລັງຮ່ວມມືກັນສືບສວນວ່າ ເຫດການທັງໝົດເປັນການກໍ່ເຫດທີ່ມີການວາງແຜນຮ່ວມກັນ ເພື່ອສ້າງຄວາມປັ່ນປ່ວນໃຫ້ແກ່ນ່ານຟ້າເອີຣົບຫຼືບໍ່.

ທ່ານ ພອລ ເມສັນ ຜູ້ຊ່ຽວຊານດ້ານຄວາມປອດໄພການບິນ ລະບຸວ່າ ການຊູ່ວ່າງລະເບີດເຮືອບິນຫຼາຍສາຍການບິນໃນເວລາດຽວກັນເປັນເຫດການທີ່ບໍ່ປົກກະຕິ ແລະມີແນວໂນ້ມວ່າອາດເປັນການກະທຳໂດຍເຈດຕະນາຂອງກຸ່ມບຸກຄົນ ຫຼາຍກວ່າຈະເປັນເຫດບັງເອີນ.

ຂະນະທີ່ ທ່ານ ມາໂກ ຊານ ອະດີດນັກບິນ ແລະອາຈານດ້ານການບິນ ໄດ້ອະທິບາຍຂັ້ນຕອນດ້ານຄວາມປອດໄພວ່າ ຄຳຊູ່ວ່າງລະເບີດທຸກກໍລະນີຈະຖືກຖືວ່າເປັນເຫດຖຸກຄາມທີ່ເປັນຈິງ ຈົນກວ່າຈະມີຫຼັກຖານຢືນຢັນວ່າບໍ່ແມ່ນ ເຖິງແມ່ນວ່າສ່ວນໃຫຍ່ຈະເປັນການຊູ່ທີ່ບໍ່ເປັນຄວາມຈິງກໍຕາມ.

ລາວອະທິບາຍເພີ່ມວ່າ ພະນັກງານປະຈຳເຮືອບິນຈະກວດກາບໍລິເວນຕ່າງໆ ພາຍໃນເຮືອບິນຢ່າງຽບໆ ແລະ ເມື່ອເຮືອບິນລົງຈອດແລ້ວ ຈະຖືກນຳໄປຈອດໃນພື້ນທີ່ແຍກສະເພາະ ເພື່ອອົບພະຍົບຜູ້ໂດຍສານອອກ ແລະເປີດທາງໃຫ້ຕຳຫຼວດເຂົ້າກວດຄົ້ນ.

ຄຳຊູ່ວ່າງລະເບີດໃນຖ້ຽວບິນທົ່ວເອີຣົບ

ມີເຮືອບິນໂດຍສານຫຼາຍຖ້ຽວໃນທົ່ວເອີຣົບຖືກຊູ່ວ່າງລະເບີດໃນຮອບ 24 ຊົ່ວໂມງຜ່ານມາ.

ແຫຼ່ງຂໍ້ມູນ: ສະໜາມບິນ ແລະໜ່ວຍງານທາງການແຜນທີ່ຈັດທຳໂດຍ: Gianluca Lo Nostro

ການກວດຄົ້ນເບື້ອງຕົ້ນບໍ່ພົບວັດຖຸລະເບີດແຕ່ຢ່າງໃດ ໂດຍຄາດວ່າ ຜູ້ຊ່ຽວຊານຈາກໜ່ວຍຍາມຝັ່ງຈະເຂົ້າກວດຄົ້ນເພີ່ມເຕີມ ກ່ອນທີ່ເຮືອຈະສາມາດອອກເດີນທາງຕໍ່ໄປໄດ້.

ທີ່ມາ: Reuters ຣອຍເຕີ

ຂ່າວຕ່າງປະເທດ · 10:13 ໂມງ · ອ່ານ 9 ຄັ້ງ

ເກົາຫຼີເໜືອຍິງວັດຖຸບໍ່ຊາບຊະນິດຈາກຊາຍຝັ່ງຕາເວັນອອກ ໄປຕົກທະເລຍີ່ປຸ່ນ ເກົາຫຼີໃຕ້-ຍີ່ປຸ່ນ ເລັ່ງກວດສອບ



ຄະນະເສນາທິການທະຫານຮ່ວມເກົາຫຼີໃຕ້ເຜີຍ ເກົາຫຼີເໜືອຍິງວັດຖຸທີ່ຍັງບໍ່ຊາບຊະນິດຈາກຊາຍຝັ່ງຕາເວັນອອກ ມຸ່ງໜ້າສູ່ທະເລຕາເວັນອອກ ຫຼື ທະເລຍີ່ປຸ່ນ.

ວັນທີ 4 ພະຈິກ 2026 ກອງທັບເກົາຫຼີໃຕ້ເປີດເຜີຍວ່າ ເກົາຫຼີເໜືອຍິງວັດຖຸທີ່ຍັງບໍ່ຊາບຊະນິດອອກຈາກຊາຍຝັ່ງຕາເວັນອອກຂອງປະເທດ ມຸ່ງໜ້າສູ່ທະເລຕາເວັນອອກ ຫຼື ທະເລຍີ່ປຸ່ນ.

ໂດຍຄະນະເສນາທິການທະຫານຮ່ວມເກົາຫຼີໃຕ້ (Joint Chiefs of Staff) ລະບຸໃນຖະແຫຼງການສັ້ນໆ ວ່າ ເກົາຫຼີເໜືອຍິງວັດຖຸປະລິດສະໜາອອກໄປຍັງທະເລຕາເວັນອອກ ແຕ່ຍັງບໍ່ມີການເປີດເຜີຍລາຍລະອຽດເພີ່ມເຕີມກ່ຽວກັບຊະນິດຂອງວັດຖຸ, ໄລຍະທາງ ຫຼື ຈຸດຕົກ.

ທີ່ມາ: AFP

ຂ່າວຕ່າງປະເທດ · 11:51 ໂມງ · ອ່ານ 8 ຄັ້ງ

ທ່ານ ຄິມ ຈອງອຶນ ຜູ້ນຳເກົາຫຼີເໜືອປະກາດຍົກລະດັບກອງທັບເຮືອ ສັ່ງສ້າງເຮືອຮົບທີ່ມີອຳນາດການຮົບສູງທີ່ສຸດໃນໂລກ



ທ່ານ ຄິມ ຈອງອຶນ ຜູ້ນຳສູງສຸດຂອງເກົາຫຼີເໜືອ ໄດ້ເດີນທາງໄປກວດຢັ້ງມອຸ່ຕໍ່ເຮືອນັມໂພ ພ້ອມປະກາດເດີນໜ້າເສີມສ້າງກຳລັງທາງທະເລຄັ້ງໃຫຍ່ ໂດຍສັ່ງສ້າງ “ເຮືອຮົບທີ່ທັນສະໄໝ ແລະມີອຳນາດການຮົບສູງທີ່ສຸດ” ເຊິ່ງຄາດວ່າອາດເປັນເຮືອຮົບລຳໃໝ່ຂະໜາດ 10,000 ໂຕນ ເພື່ອຮັບມືກັບໄພຄຸກຄາມ ແລະຄວາມຕຶງຄຽດທາງພູມລັດສາດຈາກສະຫະລັດฯ ແລະເກົາຫຼີໃຕ້.

ທ່ານ ຄິມ ຈອງອຶນ ຜູ້ນຳເກົາຫຼີເໜືອ ປະກາດເປົ້າໝາຍໃນການສ້າງເຮືອຮົບທີ່ທັນສະໄໝ ແລະມີອຳນາດການຮົບສູງທີ່ສຸດ ພ້ອມເລັ່ງເສີມສ້າງກຳລັງທາງທະເລ ເພື່ອປົກປ້ອງອະທິປະໄຕຂອງປະເທດ ທ່າມກາງສິ່ງທີ່ເກົາຫຼີເໜືອລະບຸວ່າເປັນໄພຄຸກຄາມຈາກສະຫະລັດฯ ແລະເກົາຫຼີໃຕ້.

ສຳນັກຂ່າວກາງເກົາຫຼີ (KCNA) ລາຍງານວ່າ ທ່ານ ຄິມ ໄດ້ເດີນທາງໄປກວດຢັ້ງມອຸ່ຕໍ່ເຮືອນັມໂພ ເພື່ອກວດກາຄວາມຄືບໜ້າໃນການປັບປຸງອຸ່ຕໍ່ເຮືອ ແລະເຮືອຮົບລຳໃໝ່ທີ່ກຳລັງຢູ່ໃນຂັ້ນຕອນກໍ່ສ້າງ. ທ່ານ ຄິມ ສະແດງຄວາມພໍໃຈຢ່າງຫຼາຍ ພ້ອມລະບຸວ່າ ເຮືອຮົບລຳນີ້ມີຂະໜາດໃຫຍ່ ແລະມີຄວາມເໜືອກວ່າເຮືອພິຄາດທີ່ສ້າງຂຶ້ນໃນປີກາຍນີ້ຢ່າງຫຼາຍ.

ທ່ານ ຄິມ ກ່າວວ່າ ສະຖານະການທາງພູມລັດສາດ ແລະການກະທຳທີ່ເປັນປໍລະປັກຂອງຝ່າຍທີ່ເປັນສັດຕູໃນພາກພື້ນ ສະທ້ອນໃຫ້ເຫັນເຖິງຄວາມຈຳເປັນໃນການຄອບຄອງເຮືອຮົບທີ່ທັນສະໄໝ ແລະມີອຳນາດການຮົບສູງສຸດ ລວມທັງການເລັ່ງເພີ່ມຂີດຄວາມສາມາດດ້ານການຮົບທັງເທິງຜິວນ້ຳ ແລະໃຕ້ນ້ຳ ເພື່ອປົກປ້ອງອະທິປະໄຕທາງທະເລ.

ເຖິງແມ່ນວ່າລາຍງານຈະບໍ່ໄດ້ເປີດເຜີຍລາຍລະອຽດທາງເຕັກນິກຂອງເຮືອຮົບລຳໃໝ່ ແຕ່ພາບທີ່ເຜີຍແຜ່ອອກມາໄດ້ສະແດງໃຫ້ເຫັນບາງສ່ວນຂອງຕົວເຮືອ ເຊິ່ງຜູ້ຊ່ຽວຊານປະເມີນວ່າ ອາດເປັນເຮືອຂະໜາດ 10,000 ໂຕນ ຕາມແຜນການທີ່ທ່ານ ຄິມ ເຄີຍປະກາດໄວ້ກ່ອນໜ້ານີ້.

ທ່ານ ຊິນ ຈີ່ໜຸ ເລຂາທິການຂອງສະຖາບັນສຶກສາດ້ານການປ້ອງກັນປະເທດ ແລະຄວາມໝັ້ນຄົງຂອງເກົາຫຼີ ລະບຸວ່າ ພາບດັ່ງກ່າວອາດເປັນຄັ້ງທຳອິດທີ່ເກົາຫຼີເໜືອເປີດເຜີຍສະຖານທີ່ກໍ່ສ້າງເຮືອຂະໜາດໃຫຍ່ລະດັບ 10,000 ໂຕນ ເຊິ່ງມີຄວາມເປັນໄປໄດ້ວ່າອາດເປັນເຮືອລາດຕະເວນຮົບ.

ໃນເດືອນມິຖຸນາທີ່ຜ່ານມາ ທ່ານ ຄິມ ໄດ້ປະກາດເປົ້າໝາຍໃຫ້ເກົາຫຼີເໜືອສ້າງເຮືອຮົບຢ່າງໜ້ອຍປີລະ 2 ລຳ ໂດຍມີຂະໜາດເທົ່າກັບ ຫຼືໃຫຍ່ກວ່າເຮືອພິຄາດ Choe Hyon ຂະໜາດ 5,000 ໂຕນ ລວມເຖິງເຮືອຮົບຂະໜາດ 10,000 ໂຕນ.

ນອກຈາກນີ້ ທ່ານ ຄິມ ຈອງອຶນ ຍັງສັ່ງໃຫ້ປັບປຸງອຸ່ຕໍ່ເຮືອນັມໂພ ໂດຍເນັ້ນການນຳລະບົບອັດຕະໂນມັດມາໃຊ້ໃນຂະບວນການຜະລິດ ພ້ອມທັງກໍ່ສ້າງອຸ່ແຫ້ງແຫ່ງທີສອງ ເພື່ອໃຫ້ສາມາດຕໍ່ເຮືອ ແລະສ້ອມແປງເຮືອໄດ້ພ້ອມກັນ ລວມທັງປັບປຸງແຜນຜັງອາຄານທີ່ຍັງບໍ່ເໝາະສົມ.

ຜູ້ນຳເກົາຫຼີເໜືອລະບຸວ່າ ຖານການຕໍ່ເຮືອທີ່ທັນສະໄໝ ແລະນຳໃຊ້ເຕັກໂນໂລຊີຂັ້ນສູງ ເປັນປັດໄຈສຳຄັນໃນການສ້າງກອງທັບເຮືອທີ່ເຂັ້ມແຂງ ຈົນບໍ່ມີປະເທດໃດກ້າຄຸກຄາມ.

ເກົາຫຼີເໜືອກຳລັງເລັ່ງພັດທະນາເຮືອຮົບທີ່ສາມາດຮອງຮັບອາວຸດນິວເຄຼຍ ທັງຢູ່ຝັ່ງຕາເວັນຕົກ ແລະຝັ່ງຕາເວັນອອກ ໂດຍມີເຮືອພິຄາດ ຊເວ ຮຍອນ (Choe Hyon) ປະຈຳການຢູ່ທະເລເຫຼືອງ ແລະເຮືອພິຄາດ ຄັງ ກອນ (Kang Gon) ປະຈຳການຢູ່ທະເລຕາເວັນອອກ.

ເມື່ອເດືອນກັນຍາທີ່ຜ່ານມາ ເກົາຫຼີເໜືອປະກາດນຳເຮືອພິຄາດ ຄັງ ກອນ ຂະໜາດ 5,000 ໂຕນ ເຂົ້າປະຈຳການ ພ້ອມລະບຸວ່າ ເຮືອລຳນີ້ເປັນສ່ວນໜຶ່ງຂອງລະບົບຕອບໂຕ້ດ້ວຍອາວຸດນິວເຄຼຍ ແລະຈະເຮັດໜ້າທີ່ປົກປ້ອງອະທິປະໄຕທາງທະເລ ໃນຖານະກຳລັງປ້ອງປາມເພື່ອຍັບຢັ້ງສົງຄາມນິວເຄຼຍ.

ນອກຈາກນີ້ ການເດີນທາງໄປກວດຢັ້ງມອຸ່ຕໍ່ເຮືອຂອງທ່ານ ຄິມ ຍັງເກີດຂຶ້ນພຽງໜຶ່ງມື້ ຫຼັງຈາກເກົາຫຼີເໜືອທົດສອບຍິງລູກສອນໄຟລ່ອງທາງຍຸດທະສາດ ແລະກ່ອນໜ້ານັ້ນຍັງໄດ້ທົດສອບຫົວລະເບີດແບບລູກຫວ່ານອີກດ້ວຍ.

ຂະນະດຽວກັນ ຄິມ ໂຍຈອງ ນ້ອງສາວຂອງ ຄິມ ຈອງອຶນ ໄດ້ອອກມາເຕືອນສະຫະລັດວ່າ ເກົາຫຼີເໜືອຈະຕອບໂຕ້ຮຸນແຮງຍິ່ງຂຶ້ນ ຕໍ່ສິ່ງທີ່ຕົນເອີ້ນວ່ານະໂຍບາຍທີ່ເປັນປໍລະປັກຕໍ່ເກົາຫຼີເໜືອຢ່າງບໍ່ປ່ຽນແປງຂອງລັດຖະບານສະຫະລັດ.

ທີ່ມາ: AFP

ຂ່າວຕ່າງປະເທດ · 20:35 ໂມງ · ອ່ານ 3 ຄັ້ງ

ເອເປັກ ຈັດກອງປະຊຸມ ຮ່ວມລັດຖະມົນຕີ ຕ່າງປະເທດ-ລັດຖະມົນຕີ ການຄ້າ ຄັ້ງທີ 37



ວິທະຍຸ ໂທລະພາບ ສູນກາງຈີນ, ວັນທີ 3 ພະຈິກ ນີ້, ກອງປະຊຸມ ຮ່ວມລັດຖະມົນຕີ ກະຊວງການຕ່າງປະເທດ ແລະລັດຖະມົນຕີ ກະຊວງການຄ້າ ຄັ້ງທີ 37 ຂອງ ອົງການຮ່ວມມື ເສດຖະກິດ ອາຊີ ປາຊີຟິກ ຫລື APEC ໄດ້ຈັດຂຶ້ນຢູ່ນະຄອນຫລວງ ປັກກິ່ງຂອງ ສປ ຈີນ ຜ່ານທາງ ວີດີໂອ. ທ່ານຫວາງຢີ້ ກຳມະການ ກົມການເມືອງ ສູນກາງ ພັກ ກອມມູນິດຈີນລັດຖະມົນຕີ ກະຊວງການຕ່າງປະເທດ ຈີນ ແລະ ທ່ານ ຫວາງເວີນທ່າວລັດຖະມົນຕີ ກະຊວງການ ຄ້າຈີນ ໄດ້ຮ່ວມກັນ ເປັນປະທານ ກອງປະຊຸມຄັ້ງນີ້. ຈາກ ນັ້ນ ທ່ານ ຫວາງຢີ້ ໄດ້ກ່າວວ່າ: ສປ ຈີນ ຍິນດີຮ່ວມກັບ ບັນດາປະເທດສະມາຊິກສຸມຄວາມພະຍາຍາມ ເພື່ອຊຸກຍູ້ ໃຫ້ການສ້າງ ປະຊາຄົມ ອາຊີ-ປາຊີຟິກກ້າວສູ່ລວງເລິກ ແລະ ເປັນຮູບປະທຳ ຫລາຍຂຶ້ນ. ໜຶ່ງ, ຕ້ອງເສີມສ້າງພື້ນ ຖານ ແຫ່ງຄວາມສາມັກຄີ ໃຫ້ແໜ້ນແຟ້ນ, ປະຕິບັດ ຕາມ ແນວຄິດປະຊາຄົມ ອາຊີ-ປາຊີຟິກ. ສອງ, ຕ້ອງສ້າງຂອບ ແຫ່ງການເປີດປະຕູ ໂດຍລວມ, ຮັກສາທ່າອຽງ ການຫັນ ເປັນ ປະຊາຄົມ, ສ້າງເສດຖະກິດອາຊີ-ປາ ຊີຟິກ ແບບເປີດປະຕູ. ສາມ, ຕ້ອງຮ່ວມ ກັນ ສ້າງສະພາບແວດລ້ອມ ແຫ່ງການປະ ດິດສ້າງໃໝ່, ປົ່ມເພາະແຮງຂັບເຄື່ອນ ການເຕີບໂຕໃໝ່. ສີ່, ຕ້ອງເປີດກວ້າງເສັ້ນ ທາງ ການຮ່ວມມື ເພື່ອບັນລຸ ການພັດທະ ນາ ແບບຍືນຍົງ./.

(ບັນນາທິການຂ່າວ: ຕ່າງປະເທດ)
ຮຽບຮຽງ ຂ່າວໂດຍ: ສະໄຫວ ລາດປາກດີ

ຂ່າວຕ່າງປະເທດ · 22:25 ໂມງ · ອ່ານ 2 ຄັ້ງ

ຍອດການສົ່ງອອກ ສ.ເກົາຫລີ ເພີ່ມຂຶ້ນ



ສຳນັກຂ່າວ ອິນໂຟເຄອສ: ກະຊວງການຄ້າ, ອຸດສາຫະກຳ ແລະ ຊັບພະຍາກອນຂອງ ສ.ເກົາຫລີ ເປີດເຜີຍວ່າ: ຍອດການສົ່ງອອກ ຂອງປະເທດນີ້ ໃນ ເດືອນຕຸລາ 2026 ລວມມີ1,1528 ແສນລ້ານໂດລາ ສະຫະລັດ, ເພີ່ມຂຶ້ນ 93,7%(ກວມເອົາອັດຕາສ່ວນ ປະມານເຄິ່ງໜຶ່ງ ຂອງເສດຖະກິດ ສ.ເກົາຫລີ), ເນື່ອງຈາກ ໄດ້ຮັບ ແຮງຊຸກຍູ້ຈາກ ຄວາມ ຕ້ອງການຊິບ ປັນຍາປະດິດ (AI) ທີ່ເຕີບໂຕຢ່າງເຂັ້ມແຂງ.

ຕົວເລກດັ່ງກ່າວ ຖືເປັນມູນຄ່າການສົ່ງອອກ ລາຍ ເດືອນທີ່ສູງສຸດ ເປັນອັນດັບ 2 ຫລັງຈາກທີ່ເຄີຍ ເຮັດ ສະຖິຕິສູງສຸດ ເປັນປະຫວັດສາດໃນລະດັບ 1,211 ແສນ ລ້ານໂດລາ ສະຫະລັດ ເມື່ອເດືອນກັນຍາທີ່ຜ່ານມາ.

ໂດຍຍອດການສົ່ງອອກຊິບ ເຊມິຄອນດັກເຕີ ບັນລຸ 5,644 ໝື່ນລ້ານໂດລາ ສະຫະລັດ,ເພີ່ມຂຶ້ນເຖິງ 259,4% ທ່າມກາງການ ຂະຫຍາຍການລົງທຶນ ໃນ ພື້ນຖານ ໂຄງລ່າງ ປັນຍາປະດິດ (AI) ຢ່າງຕໍ່ເນື່ອງ ເຊິ່ງສົ່ງ ຜົນໃຫ້ລາຄາຊິບ ໜ່ວຍຄວາມຈຳປັບຕົວ ສູງຂຶ້ນ.

ໃນຊ່ວງ 10 ເດືອນທຳອິດຂອງປີ 2026 ຍອດການສົ່ງອອກ ສະສົມຂອງ ສ.ເກົາຫລີ ລວມມີ9,3 ແສນລ້ານໂດລາ ສະຫະລັດ ສົ່ງຜົນໃຫ້ມີໂອກາດ ທີ່ຈະເຮັດ ສະຖິຕິ ສົ່ງອອກ ລາຍປີ ບັນລຸລະດັບ 1 ພັນຕື້ໂດລາ ສະຫະລັດເປັນປະຫວັດສາດ ໃຫ້ໄດ້ພາຍໃນເດືອນນີ້./

ຂ່າວຕ່າງປະເທດ · 20:30 ໂມງ · ອ່ານ 2 ຄັ້ງ

ຈັດງານປະກວດສູນທອນພິດພາສາລາວ ພາຍໃຕ້ຫົວຂໍ້ “ມິດຕະພາບຈີນ -ລາວ” ສຳລັບ ນັກສຶກສາຈີນ



ວິທະຍຸໂທລະພາບສູນກາງຈີນ, ງານປະກວດສູນ ທອນພິດພາສາລາວ ພາຍໃຕ້ຫົວຂໍ້ “ມິດຕະພາບຈີນ-ລາວ” ສຳລັບ ນັກສຶກສາຈີນລະດັບຊາດ ໄດ້ຈັດຂຶ້ນຢູ່ມະຫາວິທະ ຍາໄລ ພາສາຕ່າງປະເທດປັກກິ່ງ ເມື່ອບໍ່ດົນມານີ້. ໂດຍມີ ທ່ານ ນາງ ສຸທິດາ ຮຸ່ງແສງຟ້າ ທີ່ປຶກສາດ້ານການສຶກສາ ແລະ ວັດທະນະທຳຂອງສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ປະຈຳ ສປ ຈີນ, ຊ່ຽວຊານ, ນັກປາດໃນ ຂົງເຂດ ທີ່ກ່ຽວຂ້ອງ ພ້ອມດ້ວຍຜູ້ຕາງໜ້າຄູອາຈານ ແລະ ນັກສຶກສາວິຊາພາສາລາວ ທີ່ມາຈາກມະຫາວິທະຍາໄລ ແລະ ສະຖາບັນ 9 ແຫ່ງທົ່ວປະເທດຈີນ ໄດ້ເຂົ້າຮ່ວມງານ ດັ່ງກ່າວ.

ໃນໂອກາດມີຄຳເຫັນ ຕໍ່ພິທີຄັ້ງນີ້, ທ່ານ ນາງ ສຸທິດາ ຮຸ່ງແສງຟ້າ ກ່າວວ່າ: ການຮ່ວມມື ດ້ານການສຶກສາ ແມ່ນ ພາກສ່ວນສຳຄັນ ຂອງການພົວພັນລາວ-ຈີນ, ການສຶດ ສອນພາສາລາວ ຂອງມະຫາວິທະຍາໄລ ແລະ ສະຖາບັນ ແຫ່ງຕ່າງໆ ຂອງ ສປ ຈີນ ໄດ້ສ້າງບຸກຄະລາກອນ ຈຳນວນ ຫລວງຫລາຍໃຫ້ແກ່ ການແລກປ່ຽນ ແລະ ການຮ່ວມມື ລະຫວ່າງສອງປະເທດ. ພ້ອມທັ້ງ ໄດ້ແນະນຳນັກສຶກສາທັ້ງຫລາຍ ວ່າ: ຄວນສຸມຄວາມພະຍາຍາມເພື່ອຍົກສູ ງລະດັບພາສາລາວ, ເຂົ້າໃຈປະຫວັດສາດ ແລະ ວັດທະນະທຳຂອງລາວໃຫ້ເລິກເຊິ່ງ ແລະ ກາຍເປັນຜູ້ສືບທອດ ພາລະກິດ ໄມ ຕີຈິດມິດຕະພາບລາວ-ຈີນ. ໃນໂອກາດນີ້ ທ່ານ ນາງ ສູ່ຢິງໆ ຫົວໜ້າສະຖາບັນອາຊີ ຂອງມະຫາວິທະຍາໄລ ພາສາຕ່າງປະເທດ ປັກກິ່ງ ມີຄຳເຫັນວ່າ: ພາສາ ແມ່ນພື້ນ ຖານສຳຄັນໃນການສ້າງຄວາມເຂົ້າໃຈ ແລະ ການໄປມາຫາສູ່ກັນລະຫວ່າງ ປະຊາ ຊົນສອງປະເທດ, ການສ້າງບຸກຄະລາກອນ ແມ່ນເປັນສິ່ງຄ້ຳຊູທີ່ແຂງແກ່ນ ຂອງການ ພັດທະນາພາລະກິດໄມຕີຈິດມິດຕະພາບ ຈີນ-ລາວ ໃນໄລຍະຍາວ ແລະ ຫວັງວ່າ ນັກສຶກສາທີ່ຮຽນພາສາລາວ ທັ້ງຫລາຍ ຈະ ສຸມຄວາມພະຍາຍາມ ໃນການສຶກສາຮ່ຳ ຮຽນ, ເປັນຜູ້ເຂົ້າຮ່ວມ, ຜູ້ສົ່ງເສີມ ແລະ ຜູ້ ສືບທອດໄມຕີຈິດ ມິດຕະພາບ ຈີນ-ລາວ. ໃນງານປະກວດເທື່ອນີ້ ລວມມີ ນັກສຶກສາ 29 ຄົນ ໄດ້ຂຶ້ນກ່າວສູນທອນພິດ ໃນ ຫົວຂໍ້ທີ່ກຳນົດ ເຊິ່ງສະແດງໃຫ້ເຫັນເຖິງ ລະດັບພາສາລາວທີ່ດີ ຂອງເຂົາເຈົ້າ, ຄະນະ ກຳມະການຕັດສິນໄດ້ໃຫ້ຄຳແນະນຳ ທາງວິ ຊາການ ໃນດ້ານການຜັນສຽງ, ນ້ຳສຽງ ແລະ ການສະແດງອອກ ທາງວັດທະນະ ທຳ ແລະ ອື່ນໆ ໃຫ້ນັກສຶກສາທີ່ເຂົ້າຮ່ວມ ການແຂ່ງຂັນ. ຫລັງຈາກນັ້ນ ໄດ້ຈັດພິທີ ມອບລາງວັນ ໃຫ້ແກ່ ນັກສຶກສາ ແລະ ຄູ ອາຈານ ທີ່ດີເດັ່ນ./.

(ບັນນາທິການຂ່າວ: ຕ່າງປະເທດ)
ຮຽບຮຽງ ຂ່າວໂດຍ: ສະໄຫວ ລາດປາກດີ

ໂຄສະນາ

EMERGING DIGITAL SOLUTIONS

ແນວຄິດ → ອອກແບບ → ເປີດໃຊ້ງານ

ຮັບອອກແບບ ແລະ ພັດທະນາ ເວັບໄຊທ໌ · ແອັບ · ລະບົບທຸລະກິດ

ທ່ານມີແນວຄິດ?
ພວກເຮົາຊ່ວຍສ້າງໃຫ້ເປັນຈິງ

ບໍ່ວ່າທ່ານຢາກເຮັດລະບົບຫຍັງ , ພວກເຮົາຊ່ວຍໃຫ້ຄຳປຶກສາ ແລະ ສ້າງໃຫ້ເປັນຈິງໄດ້



ສິ່ງທີ່ພວກເຮົາສ້າງໃຫ້ທ່ານ

- ເວັບໄຊທ໌ທຸລະກິດ
- ເວັບແອັບ
- ແອັບມືຖື
- ຮ້ານຄ້າອອນລາຍ
- ລະບົບ CRM
- ລະບົບ ERP
- ປລັກອິນ & API
- ໂຊລູຊັນ AI

ຕິດຕໍ່ໄດ້ເລີຍ, ໃຫ້ຄຳປຶກສາຟຣີ

020 58886182

← ສະແກນ QR ເພື່ອແຊັດ WhatsApp · eds.la

ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ

ສະໜັບສະໜຸນໂດຍ [ແບຣນຂອງທ່ານ] · ພື້ນທີ່ນີ້ວ່າງ — ໜ້າຂໍ້ມູນທີ່ຄົນເປີດເບິ່ງທຸກມື້ WhatsApp 020 5888 6182

ລາຄານ້ຳມັນ 18 ແຂວງ

ກີບ/ລິດ · ມີຜົນ 22/10/2026

ແຂວງ	ແອັດຊັ່ງ 95	ທຳມະດາ 91	ກາຊອນ
ນະຄອນຫຼວງວຽງຈັນ	**▼ 40,230**	**▼ 34,490**	**▼ 34,040**
ແຂວງວຽງຈັນ	▼ 40,230	▼ 34,490	▼ 34,040
ຜົ້ງສາລີ	▼ 41,220	▼ 35,480	▼ 35,030
ຫຼວງນ້ຳທາ	▼ 40,720	▼ 34,990	▼ 34,530
ອຸດົມໄຊ	▼ 40,900	▼ 35,160	▼ 34,710
ບໍ່ແກ້ວ	▼ 40,330	▼ 34,590	▼ 34,140
ຫຼວງພະບາງ	▼ 40,740	▼ 35,000	▼ 34,550
ຫົວພັນ	▼ 40,740	▼ 35,000	▼ 34,550
ໄຊຍະບູລີ	▼ 40,550	▼ 34,820	▼ 34,370
ຊຽງຂວາງ	▼ 40,430	▼ 34,680	▼ 34,230
ໄຊສົມບຸນ	▼ 40,650	▼ 34,910	▼ 34,470
ບໍລິຄຳໄຊ	▼ 40,280	34,540	▼ 34,090
ຄຳມ່ວນ	▼ 40,260	▼ 34,520	–
ສະຫວັນນະເຂດ	▼ 40,260	▼ 34,520	▼ 34,070
ສາລະວັນ	▼ 40,510	▼ 34,780	▼ 34,330
ເຊກອງ	▼ 40,510	▼ 34,770	▼ 34,330
ຈຳປາສັກ	▼ 40,290	▼ 34,550	▼ 34,100
ອັດຕະປື	▼ 40,560	▼ 34,820	▼ 34,370

ແຫຼ່ງ: ລາຍການລາຄາ ລັດວິສາຫະກິດນ້ຳມັນເຊື້ອໄຟລາວ · mahaxan.com/today/fuel · ▲ ຂຶ້ນ ▼ ລົງ ທຽບກັບລາຄາກ່ອນ (17/09)

ປະຕິທິນ

ວັນສຳຄັນ ທີ່ໃກ້ມາເຖິງ

09/11		ວັນພຣະ
10/11		ເດືອນ 12
17/11		ວັນພຣະ
24/11		ວັນພຣະ · ບຸນນະມັດສະການ ພຣະທາດຫຼວງວຽງຈັນ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍອັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ອັດຕາແລກປ່ຽນ

ກີບ · BCEL 04/11/2026

ສະກຸນເງິນ	ຊື້ (ເງິນສົດ)	ຂາຍ
USD ໂດລາ ສະຫະລັດ	▼ 22,282	▼ 22,623
THB ບາດ ໄທ	▲ 667.13	▲ 680.39
CNY ຢວນ ຈີນ	▼ 3,332	▼ 3,398
EUR ເອີໂຣ	▲ 24,981	▲ 25,481
VND ດົ່ງ ຫວຽດນາມ	0.86	0.87
JPY ເຢັນ ຍີ່ປຸ່ນ	▼ 141.15	▼ 143.95
SGD ໂດລາ ສິງກະໂປ	▲ 17,091	▲ 17,772
GBP ປອນ ອັງກິດ	▲ 29,890	▲ 30,487

ສະເລ່ຍທະນາຄານ (ທຫລ): USD ຊື້ 22,398 · ຂາຍ 22,621 · ▲ ຂຶ້ນ ▼ ລົງ ທຽບກັບມື້ກ່ອນ

ລາຄາຄຳ

ກີບ · ຂາຍ

ຄຳຮູບປະພັນ 1 ບາດ

44,430,000

▼ 120,000

ຄຳແທ່ງ 99.99% · 1 ກຣາມ

2,967,600

▲ 68,000

ອັບເດດ 05/11 05:30 · mahaxan.com/today/gold

ຫວຍພັດທະນາ

ງວດ 189

ອອກວັນທີ 04/11/2026

048808

ງວດ 188 · 03/11	145713
ງວດ 187 · 02/11	738155
ງວດ 186 · 30/10	863206
ງວດ 185 · 29/10	723294

ຕົວເລກປ່ຽນທຸກມື້ — ເບິ່ງສົດ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອຸນຫະພູມ ອັບເດດສົດ ທີ່ mahaxan.com/today

ກິລາ · 09:34 ໂມງ · ອ່ານ 13 ຄັ້ງ

ນັກເຕະສະເປນເສຍຊີວິດໃນອາຍຸ 30 ປີ ຫຼັງຖືກຫົວເຂົ່າຂອງຜູ້ຮັກສາປະຕູກະທົບໃສ່ໜ້າເອິກ ຈົນເກີດພາວະຫົວໃຈຢຸດເຕັ້ນກາງສະໜາມ



ຕຳຫຼວດສະເປນໄດ້ເປີດການສືບສວນກໍລະນີທີ່ອາດເຂົ້າຂ່າຍການເຮັດໃຫ້ຜູ້ອື່ນເສຍຊີວິດໂດຍບໍ່ເຈດຕະນາ ຫຼັງຈາກນັກເຕະບານຄົນໜຶ່ງເສຍຊີວິດຈາກເຫດປະທະກັນກັບຜູ້ຮັກສາປະຕູຂອງທີມຄູ່ແຂ່ງ ໃນການແຂ່ງຂັນບານເຕະລີກລະດັບສອງຂອງສະເປນ.

ສະໂມສອນເຕເນຣິເຟໄດ້ແຈ້ງໃນວັນອັງຄານວ່າ ເຮຊຸສ ເດ ມິເກວ ກອງໜ້າຂອງທີມ ໄດ້ເສຍຊີວິດຫຼັງຈາກເກີດພາວະຫົວໃຈຢຸດເຕັ້ນ ພາຍຫຼັງເຫດປະທະກັນກາງສະໜາມ. ມີອາຍຸ 30 ປີ.

ໃນວັນຈັນ ເດ ມິເກວ ກຳລັງຍາດບານຢູ່ໃກ້ເສັ້ນກາງສະໜາມ ກ່ອນຈະຖືກຫົວເຂົ່າຂອງຜູ້ຮັກສາປະຕູທີມອັນໂດຣາ ກະທົບໃສ່ໜ້າເອິກ. ຜູ້ຮັກສາປະຕູຄົນດັ່ງກ່າວແລ່ນອອກມາຈາກອີກທິດທາງໜຶ່ງ ໂດຍຄາດວ່າພະຍາຍາມອອກມາສະກັດບານ.

ຜູ້ຮັກສາປະຕູຄົນດັ່ງກ່າວຖືກກຳມະການຊູໃບແດງໄລ່ອອກຈາກສະໜາມໂດຍກົງ ເນື່ອງຈາກເຫດປະທະກັນທີ່ເກີດຂຶ້ນໃນຊ່ວງທົດເວລາບາດເຈັບ.

ຕຳຫຼວດແຫ່ງຊາດສະເປນແຈ້ງໃນວັນອັງຄານວ່າ ໄດ້ເປີດການສືບສວນກໍລະນີນີ້ແລ້ວ. ຕາມກົດໝາຍຂອງສະເປນ ການເສຍຊີວິດທີ່ບໍ່ໄດ້ເກີດຈາກສາເຫດທາງທຳມະຊາດ ລວມທັງການເສຍຊີວິດຈາກອຸບັດຕິເຫດ ຈະຕ້ອງຜ່ານການສືບສວນທາງຕຸລາການ.

ຫົວໜ້າໄອຍະການເມືອງ ຊານຕາ ກຣູຊ ເດ ເຕເນຣິເຟ ໄດ້ໃຫ້ສຳນັກຂ່າວຂອງສະເປນວ່າ ໂອກາດທີ່ຈະມີການດຳເນີນຄະດີອາຍາມີໜ້ອຍ ເນື່ອງຈາກເຫດປະທະກັນເກີດຂຶ້ນໃນລະຫວ່າງການແຂ່ງຂັນ.

ເດ ມິເກວ ຖືກນຳສົ່ງໂຮງໝໍ ແລະ ການແຂ່ງຂັນທີ່ມີຜົນສະກໍ 2-2 ກໍຖືກຢຸດຕິລົງຫຼັງເກີດເຫດການ.

ສະໂມສອນເຕເນຣິເຟ ທີ່ຕັ້ງຢູ່ໃນໝູ່ເກາະການາຣີຂອງສະເປນ ລະບຸວ່າ ສະໂມສອນຮູ້ສຶກໂສກເສົ້າ ແລະໃຈສະຫຼາຍຢ່າງເລິກເຊິ່ງຕໍ່ການຈາກໄປຂອງນັກເຕະຄົນນີ້.

ໄອໂກ ກາຣ໌ເຊຍ ຜູ້ຖືຫຸ້ນລາຍໃຫຍ່ຂອງສະໂມສອນເຕເນຣິເຟ ກ່າວຕໍ່ນັກຂ່າວວ່າ ສົບຂອງ ເດ ມິເກວ ຈະຖືກນຳສົ່ງໄປຍັງເມືອງນາວາເອີໂມຊາ ໃນແຂວງໂຕເລໂດ ຕາມຄວາມປະສົງຂອງຄອບຄົວ.

ລາວກ່າວວ່າ ເພື່ອນຮ່ວມທີມ ແລະ ຜູ້ບໍລິຫານຂອງສະໂມສອນ ຈະເດີນທາງໄປຮ່ວມສົ່ງລາວເປັນຄັ້ງສຸດທ້າຍ.

ທ່ານ ກາຣ໌ເຊຍ ຍັງກ່າວວ່າ ໃນວັນເສົາມື້ ແຟນບານຈະມາລວມຕົວກັນທີ່ສະໜາມຂອງທີມ ເພື່ອຈັດພິທີລະນຶກເຖິງນັກເຕະຜູ້ລ່ວງລັບຄົນນີ້.

ທີມບານເຕະໃນລາຍການ UEFA Champions League ຮ່ວມກັນສະແດງຄວາມອາໄລ ແລະລະນຶກເຖິງ De Miguel ຫຼັງຈາກລາວເສຍຊີວິດ (ພາບ: AP)

ບັນດາສະໂມສອນບານເຕະທີ່ລົງແຂ່ງຂັນໃນລາຍການຢູຟາ ແຊມປຽນລີກ ເມື່ອວັນອັງຄານ ໄດ້ຮ່ວມກັນສະແດງຄວາມອາໄລຕໍ່ ເຮຊຸສ ເດ ມິເກວ ກອງໜ້າຂອງສະໂມສອນເຕເນຣິເຟ ຫຼັງຈາກລາວເສຍຊີວິດຈາກເຫດປະທະກັນກາງສະໜາມ.

ສາມສະໂມສອນຈາກສະເປນທີ່ເປັນເຈົ້າພາບຈັດການແຂ່ງຂັນໃນຄືນນັ້ນ ປະກອບມີ ບາເຊໂລນາ, ແອັດເລຕິໂກ ມາດຣິດ ແລະ ບີຢາເຣອັນ ໄດ້ຕັດສິນໃຈຖົດເປີດເພງປະຈຳລາຍການຢູຟາ ແຊມປຽນລີກ ຕາມທຳນຽມກ່ອນເລີ່ມການແຂ່ງຂັນ ເພື່ອສະແດງຄວາມອາໄລຕໍ່ ເດ ມິເກວ ອາຍຸ 30 ປີ ຜູ້ທີ່ເກີດພາວະຫົວໃຈຢຸດເຕັ້ນ ຫຼັງຈາກຖືກຫົວເຂົ່າຂອງ ເຮຊຸສ ໂອໂວໂນ ຜູ້ຮັກສາປະຕູສະໂມສອນອັນໂດຣາ ກະແທກໃສ່ໜ້າເອິກ ໃນການແຂ່ງຂັນລີກລະດັບສອງຂອງສະເປນ ເມື່ອວັນຈັນ.

ນອກຈາກສາມສະໜາມໃນສະເປນແລ້ວ ສະໜາມອື່ນໆທົ່ວເອີຣົບ ລວມທັງສະໜາມໂອລດ໌ ແທຣຟອດ ທີ່ສະໂມສອນແມນເຊສເຕີ ຢູໄນເຕັດ ລົງແຂ່ງຂັນກັບ ໂຣມາ ກໍໄດ້ຈັດພິທີຍືນສະຫງົບນິ່ງເປັນເວລາ 1 ນາທີ ເພື່ອໄວ້ອາໄລແກ່ນັກເຕະຜູ້ລ່ວງລັບ. ພ້ອມກັນນັ້ນ ພາບຂອງລາວຍັງຖືກສາຍຂຶ້ນຈໍໃຫຍ່ພາຍໃນສະໜາມອີກດ້ວຍ.

ຂະນະດຽວກັນ ມິເກວ ອາເຕຕາ ຜູ້ຈັດການທີມອາເຊນອນ ແລະ ມິເກວ ເມຣິໂນ ກອງກາງຂອງທີມ ເຊິ່ງທັງສອງເປັນຄົນປະເທດສະເປນ ກໍໄດ້ເລີ່ມຕົ້ນການແຖລງຂ່າວກ່ອນເກມພົບກັບ ສະລາເວຍ ປຣາກ ໃນວັນພຸດ ດ້ວຍການກ່າວສະແດງຄວາມອາໄລຕໍ່ ເດ ມິເກວ.

ທີ່ມາ: AP (AP)

ໂຄສະນາ

ເຂົ້າເຖິງຜູ້ອ່ານຄົນລາວ ທຸກເຊົ້າ

ໜ້າຫຼັງ ແມ່ນໜ້າທີ່ເຫັນທຸກຄັ້ງທີ່ປິດໜັງສືພິມ. ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ.

ເບິ່ງລາຄາ: mahaxan.com/media-kit

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ມະຫາສານ ລາຍວັນ ຈັດພິມໂດຍ ມະຫາສານ (mahaxan.com) · 302/3B ຊັ້ນ 3 ອາຄານວຽງວັງ, ຖະໜົນບໍລິຈັນ, ນະຄອນຫຼວງວຽງຈັນ · info@mahaxan.com · WhatsApp +856 20 5888 6182
ຂ່າວໃນສະບັບນີ້ ເຜີຍແຜ່ໃນ mahaxan.com ວັນພຸດ 4 ພະຈິກ 2026. ສຳເນົາ PDF ນີ້ໃຫ້ໝູ່ໄດ້ຟຣີ ໂດຍບໍ່ດັດແກ້ເນື້ອໃນ.